ຮ່າງ BS ສະບັບວັນທີ 01 ມີນາ 2019

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

# ບົດສະຫຼຸບສັງລວມ ຕີລາຄາ ຮອບດ້ານ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2018 ແລະ ທິດທາງແຜນການ ປະຈຳປີ 2019

**ຮຽນ :** - ທ່ານ ປອ ລຽນ ທິແກ້ວ, ກຳມະການສູນກາງພັກ, ເລຂາຄະນະພັກ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ທີ່ ນັບຖືຢ່າງສູງ.

- ທ່ານ ລັດຖະມົນຕີ, ປະທານຄະນະກຳມະທິການ ຂອງ ສະພາແຫ່ງຊາດ ທີ່ນັບຖືຢ່າງສູງ
- ບັນດາ ທ່ານ ຮອງລັດຖະມົນຕີ, ຮອງເຈົ້າແຂວງ, ຄະນະນຳບັນດາອົງການທຽບເທົ່າ
- ບັນດາ ຜູ້ແທນກອງປະຊຸມ ທີ່ມາຈາກສູນກາງ ແລະ ແຂວງທ້ອງຖິ່ນ
- ທີ່ປະຊຸມ...

ມື້ນີ້, ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮັບການມອບໝາຍ ຈາກ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອສະເໜີໂດຍຫຍໍ້ ແລະ ສັງລວມ ກ່ຽວກັບ ສະພາບການ ຈັດຕັ້ງວຽກງານ ຢ່າງຮອບດ້ານ ໃນທົ່ວຂະແໜງ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ປີ 2018 ແລະ ທິດທາງແຜນການຕໍ່ໜ້າ, ບັນດາວຽກຈຸດສຸມ, ແຜນງົບປະມານ ແລະ ບັນດາມາດຕະການ ແລະ ນະໂຍບາຍຕົວຈິງ ທີ່ ຄະນະນຳກະຊວງ, ການນຳແຂວງ ແລະ ທົ່ວຂະແໜງການ ສາຍຕັ້ງ ແລະ ຂະແໜງການ ປິ່ນອ້ອມສຳຄັນ ໄດ້ພ້ອມກັນ ເອົາໃຈໃສ່ ຊີ້ນຳ-ນຳພາ ແລະ ໃຫ້ການສະໜັບສະໜູນ ຕະຫຼອດໄລຍະປີ 2018, ຊຶ່ງເປັນປີທີ 3 ແລະ ເປັນປີ ທີ່ສຳຄັນທີ່ສຸດ ໃນການຈັດຕັ້ງປະຕິບັດແຜນການ, ບັນດາແຜນດຳເນີນງານ ແລະ ກໍ່ຄືບັນດາ ໂຄງການ ບູລິມະສິດ ຂອງ ຂະແໜງການ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ເນື່ອງຈາກ ເປັນປີ ສະຫຼຸບ ກາງສະໄໝ ກ່ຽວກັບ ຜົນການປະຕິບັດ ແຜນການພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ໄລຍະ 5 ປີ ແຕ່ປີ 2016 ຫາ 2020 ໂດຍສະເພາະແມ່ນ ຜົນຄືບໜ້າ ແລະ ການປະກອບສ່ວນຕົວຈິງ ຂອງ ຂະແໜງການພວກເຮົາ ຕໍ່ການຈັດຕັ້ງປະຕິບັດ ບັນດາຄາດໝາຍສູ້ຊົນ ແລະ ບັນດານະໂຍບາຍກຳນົດໄວ້ ໃນມະຕິ ກອງປະຊຸມໃຫຍ່ ຄັ້ງທີ X.

ແຜນການ ປີ 2018, ພວກເຮົາ ໄດ້ສຸມໃສ່ ຈັດຕັ້ງປະຕິບັດ ເພື່ອບັນລຸ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ ໃນມະຕິ ກອງປະຊຸມ ສະພາແຫ່ງຊາດ ສະບັບເລກທີ 075/ສພຊ, 076/ສພຊ ກໍ່ຄື ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 397/ນຍ ເປັນຕົ້ນແມ່ນ ສືບຕໍ່ເຮັດໃຫ້ ການຂະຫຍາຍຕົວ ຂອງລວມຍອດ ຜະລິດຕະພັນກະສິກຳ ແລະ ປາໄມ້ ຂະຫຍາຍຕົວ ໃນລະດັບ 2,8% ຂຶ້ນໄປ ກວມເອົາປະມານ 15,73% ຂອງ ໂຄງປະກອບເສດຖະກິດແຫ່ງຊາດ, ປະກອບສ່ວນໃຫ້ GDP ຂະຫຍາຍຕົວ ບໍ່ໃຫ້ຫຼຸດ 7%, ຜະລິດເຂົ້າໃຫ້ໄດ້ 4,2 ລ້ານໂຕນ, ກາເຟ ໃຫ້ໄດ້ 137.500 ໂຕນ, ສາລີອາຫານສັດ ໃຫ້ໄດ້ 1,2 ລ້ານກວ່າໂຕນ, ອ້ອຍ ໃຫ້ໄດ້ 2 ລ້ານກວ່າ ໂຕນ, ຢາສູບ 71.500 ໂຕນ, ມັນຕົ້ນ 2,4 ລ້ານກວ່າໂຕນ, ສືບຕໍ່ສຸມໃສ່ ແກ້ໄຂຄອບຄົວທຸກຍາກ ໃຫ້ໄດ້ 4.833 ຄອບຄົວ; ແກ້ໄຂ ບ້ານທຸກຍາກ ໃຫ້ໄດ້ 220 ບ້ານ, ແກ້ໄຂ ເມືອງທຸກຍາກ ໃຫ້ໄດ້ 2 ເມືອງ; ສ້າງບ້ານພັດທະນາ ໃຫ້ໄດ້ 100 ບ້ານ, ສ້າງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງ ໃນຊົນນະບົດ ໃຫ້ໄດ້ແຂວງລະ 2-3 ບ້ານ; ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນ ໃຫ້ປະຊາຊົນ ໃຫ້ໄດ້ 163 ບ້ານ ແລະ ນຳສະເໜີ ປ່າສະຫງວນ ແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນ ແຫ່ງຊາດ ນ້ຳແອດ-ພູເລີຍ ຂຶ້ນເປັນອຸທິຍານແຫ່ງຊາດ.

ການຈັດຕັ້ງປະຕິບັດບັນຕົວເລກຄາດໝາຍສູ້ຊົນດັ່ງກ່າວນັ້ນ ແມ່ນ ໄດ້ບັນລຸຕາມແຜນການ ເປັນສ່ວນໃຫຍ່ ແລະ ບາງດ້ານກໍ່ແມ່ນລື່ນແຜນການທີ່ກຳນົດໄວ້ ຍ້ອນການເອົາໃຈໃສ່ໃກ້ຊິດຕິດແທດ ແລະ ການຊີ້ນຳ-ນຳພາ

ຂອງການນຳກະຊວງ, ກະຊວງ-ຂະແໜງການຂັ້ນສູນກາງ, ແຂວງ, ນະຄອນຫຼວງ, ເມືອງ, ບ້ານ ແລະ ຄວາມຕື່ນຕົວຂອງພໍ່ແມ່ປະຊາຊົນ. ສະນັ້ນ, ການລາຍງານ ຂອງ ຂ້າພະເຈົ້າ ແມ່ນຈະໄດ້ຍົກເອົາບາງຜົນງານອັນພົ້ນເດັ່ນ, ບາງປະເດັນບັນຫາທີ່ຕ້ອງໄດ້ເອົາໃຈໃສ່ແກ້ໄຂ ແລະ ທິດທາງແຜນການຕໍ່ໜ້າ ດັ່ງນີ້:

**1. ຕີລາຄາຜົນສຳເລັດໃນແຕ່ລະດ້ານດັ່ງນີ້:**

**ອັນທີ 1: ດ້ານສະພາບການຜະລິດ ສະບຽງ ແລະ ສິນຄ້າ**

ປີ 2018 ຜ່ານມາ ປະເທດພວກເຮົາ ໄດ້ຮັບຜົນກະທົບ ຈາກໄພພິບັດ ທາງທຳມະຊາດ ໜັກໜ່ວງສົມຄວນ ຊຶ່ງເກີດຈາກພະຍຸ ເຊີນຕິນ ແລະ ເບີບິນກາ ໄດ້ເຮັດໃຫ້ຫຼາຍພື້ນທີ່ທົ່ວປະເທດ 17 ແຂວງ ແລະ ນະຄອນຫຼວງວຽງຈັນ, ນັບແຕ່ເມືອງຍອດອູ ແຂວງ ຜົ້ງສາລີ; ເມືອງ ສະໜາມໄຊ ແຂວງອັດຕະປື, ມີ 112 ເມືອງ, 2,510 ບ້ານ ແລະ 119,375 ຄອບຄົວ ໄດ້ຮັບຜົນກະທົບ, ຮ້າຍແຮງກວ່າເພິ່ນ ແມ່ນ 6 ບ້ານ ຂອງ ເມືອງສະໜາມໄຊ ແຂວງອັດຕະປື. ຜົນເສຍຫາຍ ໄດ້ສົ່ງຜົນເຮັດໃຫ້ ເນື້ອທີ່ ປູກເຂົ້ານາປີ ຖືກກະທົບ ມີ 119.600 ເຮັກຕາ; ເນື້ອທີ່ ເສຍຫາຍ ທັງໝົດ ມາຮອດປະຈຸບັນ 90.670 ເຮັກຕາ ຫຼື ເທົ່າກັບ 12 % ຂອງ ເນື້ອທີ່ນາ ທັງໝົດ 817.000 ເຮັກຕາ ເກີນຄ່າ ເຕືອນໄພແລ້ວ (ຄ່າເຕືອນໄພ 6%); ເຂົ້າໄຮ່ ເສຍຫາຍ 4.000 ເຮັກຕາ, ສ່ວນພືດເສຍຫາຍ 11.600 ກວ່າເຮັກຕາ. ຖ້າທຽບໃສ່ ຜົນກະທົບ ຈາກພາຍຸ ໄຮມາ ແລະ ນົກເຕັນ ໃນປີ 2011 ນັ້ນ ເຫັນວ່າ ຜົນເສຍຫາຍ ໃນປີ 2018 ຫຼຸດລົງ 12.000 ເຮັກຕາ (ເນື້ອທີ່ ຜະລິດກະສິກຳ ໃນປີ 2011 ເສຍຫາຍ 102.678 ເຮັກຕາ ຂອງເນື້ອທີ່ປູກ). ຊົນລະປະທານ ຖືກຜົນກະທົບ 778 ໂຄງການ. ນອກຈາກນັ້ນແລ້ວ ຢູ່ຫຼາຍທ້ອງຖິ່ນ ເນື້ອທີ່ປູກເຂົ້າ ທີ່ຍັງເຫຼືອ ຊໍ້າພັດຖືກ ສັດຕູພືດ ທຳລາຍ, ຝົນຕົກແກ່ຍາວ ເຮັດໃຫ້ ກໍເຂົ້າ ບໍ່ຂະຫຍາຍຕົວ, ຮວງເຂົ້າ ມີເມັດລີບຫຼາຍເຮັດໃຫ້ຜົນຜະລິດ ຫຼຸດຄາດໝາຍ.

ຕໍ່ສະພາບການດັ່ງກ່າວນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ກໍ່ໄດ້ມີການປຶກສາຫາລື ວາງແຜນການຮັບມືກັບໄພທຳມະຊາດ ຢ່າງລະອຽດ ແຕ່ຫົວທີ ແລະ ກໍ່ໄດ້ອອກແຈ້ງການ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ຂະແໜງກະສິກຳ ທົ່ວປະເທດ ກະກຽມຕິດຕາມ-ເຝົ້າລະວັງ ແລະ ກະກຽມຄວາມພ້ອມຮັບມືກັບໄພທຳມະຊາດ, ພ້ອມທັງໄດ້ແຕ່ງຕັ້ງຄະນະສະເພາະກິດຂັ້ນສູນກາງ ແລະ ໄດ້ມອບໝາຍ ໃຫ້ການ ນ□າກະຊວງ ນຳພາ ທີມວິຊາການ ທີ່ກ່ຽວຂ້ອງ ໄປຊ່ວຍເຜີຍແຜ່ ແນະນຳ ເປັນແຕ່ລະໄລຍະຢ່າງຕໍ່ເນື່ອງ ແລະ ລວມທັງການຈັດສົ່ງທີມງານ ວິຊາການ ລົງໄປທົບທວນທ້ອງຖິ່ນ ເພື່ອກວດກາ-ເກັບກຳຂໍ້ມູນຜົນກະທົບ ຈາກ ໄພນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດ ແລະ ພະຍາດສັດລະບາດ ແລະ ອື່ນໆ ຢູ່ໃນຫຼາຍທ້ອງຖິ່ນ ເພື່ອສະເໜີຄວາມຕ້ອງການ ທາງດ້ານງົບປະມານ  ຟື້ນຟູ-ສ້ອມແປງ ຊົນລະປະທານ, ແນວພັນ ແລະ ປັດໃຈການຜະລິດຕ່າງໆ ເພື່ອລາຍງານ ຕໍ່ລັດຖະບານ ພິຈາລະນາ.

ເພື່ອເປັນການທົດແທນ ຜົນເສຍຫາຍ ໃນລະດູຝົນ ປີ 2018 ນີ້ ແລະ ໃຫ້ສາມາດສືບຕໍ່ຄໍ້າປະກັນດ້ານສະບຽງພາຍໃນ ພ້ອມທັງມີສ່ວນແຮໄວ້ ແລະ ຂາຍເປັນສິນຄ້າ, ດັ່ງນັ້ນ, ຂະແໜງກະສິກຳ ແລະ ປ່າໄມ້ ທົ່ວປະເທດ ຈຶ່ງໄດ້ຄົ້ນຄວ້າ ແລະ ເປັນເອກະພາບ ໃນການວາງຕົວເລກຄາດໝາຍສູ້ຊົນສູງກວ່າທຸກປີ ຄື: ການປູກເຂົ້ານາແຊງໃຫ້ໄດ້ 100.000 ເຮັກຕາ, ປູກພືດເປັນສິນຄ້າ ໃຫ້ໄດ້ 185.000 ເຮັກຕາ; ການປູກເຂົ້າລະດູນາປີ 2019 ໃຫ້ໄດ້ 850.000 ເຮັກຕາ ເພີ່ມຂຶ້ນຈາກປີ 2018: 40.000 ເຮັກຕາ. ເພື່ອປະຕິບັດໃຫ້ສາມາດບັນລຸຄາດໝາຍສູ້ຊົນນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດຕັ້ງທີມງານ ໂດຍການນຳພາ ຂອງ ທ່ານລັດຖະມົນຕີ ແລະ ບັນດາທ່ານຮອງລັດຖະມົນຕີ ສົມທົບກັບ ຫຼາຍຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທົ່ວປະເທດ ປຸກລະດົມຂະບວນການທົ່ວປວງຊົນ ຫັນເຂົ້າສູ່ການຜະລິດລະດູແລ້ງ ໃຫ້ໄດ້ຕາມແຜນການທີ່ວາງໄວ້.

ຍ້ອນຄວາມເອົາໃຈໃສ່ ຂອງ ພັກ ແລະ ລັດຖະບານ ໃນການ ຕອບໂຕ້ ກະທັນຫັນ ແລະ ມີມາດຕະການແກ້ໄຂໄວ ຕໍ່ກັບ ບັນຫາ ໄພພິບັດ, ການລະບາດ ຂອງ ພະຍາດພືດ-ສັດ, ພວກເຮົາ ຈຶ່ງສາມາດ ຈັດຕັ້ງປະຕິບັດການຜະລິດ ສະບຽງ ແລະ ສິນຄ້າ ໄດ້ຢ່າງພຽງພໍຕາມຄວາມຕ້ອງການຂອງສັງຄົມ ແລະ ຮັກສາໄດ້ຄວາມສະຫງົບໝາຍວ່າ ລາຄາເຂົ້າ, ສິນຄ້າກະສິກຳອື່ນໆ ກໍ່ຢູ່ໃນເກນປົກກະຕິ ໂດຍສະເພາະແມ່ນລາຄາເຂົ້າ ແລະ ສາມາດປະຕິບັດບັນລຸຕົວເລກການຜະລິດເຂົ້າທັງໝົດແມ່ນ 3,6 ລ້ານກວ່າໂຕນ ຊຶ່ງບໍ່ບັນລຸແຜນການ ແຕ່ຖ້າເບິ່ງໃນດ້ານການຄໍ້າປະກັນ ສະບຽງພາຍໃນ ແມ່ນພຽງພໍ ຊຶ່ງມີຄວາມຕ້ອງການ ໃນລະດັບ 2,5 ລ້ານໂຕນ. ພ້ອມດຽວກັນນີ້, ການຜະລິດ ພືດ ສະບຽງອາຫານອື່ນໆ ກໍ່ສາມາດບັນລຸຕາມແຜນການ, ໄປຄຽງຄູ່ກັບການຜະລິດ ເພື່ອການສົ່ງອອກສິນຄ້າກະສິກຳ ກໍ່ຮັກສາໄດ້ ຈັງຫວະການສົ່ງອອກ ດີພໍສົມຄວນ ເຖິງແມ່ນວ່າ ຈະບໍ່ເທົ່າກັບມູນຄ່າ ການສົ່ງອອກໃນປີ 2016 ທີ່ມີບໍລິມາດ ສົ່ງອອກເຖິງ 1 ຕື້ ໂດລາສະຫະລັດ ເນື່ອງຈາກ ບາງລາຍການສິນຄ້າ ຖືກກະທົບ ດ້ານລາຄາ, ການຜະລິດ ບໍ່ຖືກ ຕາມລະບຽບ (GAP, SPS ແລະ ອື່ນໆ) ໂດຍສະເພາະ ການປູກກ້ວຍ ທີ່ບໍ່ຖືກ

ເຕັກນິກ ກະສິກຳ ສະອາດ ເຮັດໃຫ້ ຈຳນວນ ບໍລິສັດ ກໍ່ຄື ເນື້ອທີ່ ສວນປູກ ຫຼຸດລົງ ຊຶ່ງກໍ່ສົ່ງຜົນເຖິງ ປະລິມານ ການສົ່ງອອກ.

ຄຽງຄູ່ກັນນັ້ນ, ຂະແໜງການ ພວກເຮົາ ກໍ່ສາມາດ ຍາດໄດ້ ຫຼາຍຜົນງານ ອັນພົ້ນເດັ່ນ ທີ່ໄດ້ກະທົບໃສ່ ວຽກງານການຜະລິດສະບຽງ ແລະ ສິນຄ້າ ກໍ່ຄື ການແກ້ໄຂຄວາມທຸກຍາກ, ຊຶ່ງພວກເຮົາໄດ້ສຸມທຸກກຳລັງແຮງ ໃນການຊຸກຍູ້, ຫັນການຜະລິດກະສິກຳ ໄປສູ່ ອຸດສະຫະກຳ ແລະ ທັນສະໄໝ ເປັນກ້າວໆ ແລະ ໄດ້ກຳນົດ ເປັນພື້ນທີ່ກວ້າງ ເປັນຈຸດສຸມການຜະລິດ ເພື່ອຫັນມານຳໃຊ້ກົນຈັກ ແລະ ນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ ແນ່ໃສ່ຍົກຜະລິດຕະພາບ ແລະ ຫຼຸດຕົ້ນທຶນການຜະລິດ, ລະອຽດບາງວຽກພົ້ນເດັ່ນ ດັ່ງນີ້:

- <u>ວຽກດິນກະສິກຳ</u>: ສຳເລັດ ການສຳຫຼວດຂອບເຂດ, ປະເມີນຄຸນນະພາບດິນນາ ໃນເຂດ-ນອກເຂດຊົນລະປະທານ ແລະ ສ້າງແຜນທີ່ 10 ຊະນິດ ມີເນື້ອທີ່ດິນນາ ທັງໝົດ 56.011 ຮຕ (ມາດຕາສ່ວນ 1/5,000, ເນື້ອທີ່ດິນນາໃນເຂດຊົນລະປະທານ 26.505 ຮຕ) ຈຳນວນ 486 ບ້ານ ໃນ 7 ເມືອງ ແລະ 7 ແຂວງ. ຄຽງຄູ່ກັນນີ້, ກໍ່ໄດ້ເຮັດສຳເລັດ ການຂຶ້ນສຳມະໂນ ດິນນາ ໃນເຂດຊົນລະປະທານ ໄດ້ 12.829 ຕອນດິນ ໃນເຂດຊົນລະ ປະທານ 11.560 ເຮັກຕາ ໃນ 178 ບ້ານ 6 ເມືອງ 6 ແຂວງ, ພ້ອມດຽວກັນນີ້, ກໍ່ <u>ໄດ້ສ້າງໝໍດິນ ຂັ້ນບ້ານ ໄດ້ທັງໝົດ 697 ຄົນໃນ 240 ບ້ານ ແລະ</u> ສ້າງໄດ້ ຊາວນາຕົວແບບປັບປຸງດິນນາ ຍົກຜະລິດຕະພາບ ຈຳນວນ 7 ກຸ່ມ 70 ຄອບຄົວ ໃນ 7 ບ້ານ ຢູ່ 7 ເມືອງ ຂອງ 7 ແຂວງ ໄດ້ມີເນື້ອທີ່ສາທິດທັງໝົດ 35 ເຮັກຕາ.
- <u>ວຽກແນວພັນ</u> ແມ່ນສາມາດຮັບປະກັນ ການຜະລິດ ແນວພັນເຂົ້າ ເພື່ອຜະລິດສະບຽງ ຊຶ່ງມາຮອດປັດຈຸບັນ ໄດ້ 10.000 ໂຕນ ຈາກເຄີຍໄດ້ 2000 ໂຕນ ແລະ ຍັງໄດ້ສົ່ງເສີມກຸ່ມປູກເຂົ້າແນວພັນ, ຜະລິດແນວ ເຂົ້າດີ ໄດ້ເຖິງ 30.000 ໂຕນ. ໃນປັດຈຸບັນແມ່ນສືບຕໍ່ ສ້າງພື້ນຖານໂຄງລ່າງ ຜະລິດແນວພັນ ໃຫ້ເຂັ້ມແຂງ ໜັກແໜ້ນ ເພື່ອຮັບປະກັນ ການຜະລິດແນວພັນ ໃຫ້ຍືນຍົງ.
- <u>ວຽກການຫັນເປັນກົນຈັກ ແລະ ສົ່ງເສີມບໍລິການເຕັກນິກ</u> ແມ່ນໄດ້ສຸມໃສ່ທົດລອງ ໃນພື້ນທີ່ກ້ວາງ ຢູ່ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປະສັກ. ໃນເຂດຈຸດສຸມຜະລິດດ້ວຍກົນຈັກແມ່ນມີເນື້ອທີ່ ເປີດກ້ວາງ ການຜະລິດເຖິງ 50.000 ຫາ 60.000 ເຮັກຕາ, ຊຶ່ງໄດ້ຖືກຮັບຮອງ ໄດ້ມາດຖານ GAP ໝົດ ແລະ ມີການພັດທະນາ ການຜະລິດ ແບບເປັນລະບົບຕ່ອງໂສ້ ຕິດພັນກັບ ລະບົບໂຮງສີ ທີ່ມີເຖິງ 30 ໂຮງ, ໝາຍວ່າ ໃນເຂດ ດັ່ງກ່າວ ແມ່ນໄດ້ ພັດທະນາ ໃຫ້ມີ ການສຳພັນຮ່ວມມື ແລະ ສຳພັນເສດຖະກິດ ໃນຮູບແບບ 4 ຫຸ້ນສ່ວນ. ໃນເຂດພື້ນທີ່ດັ່ງກ່າວ ໄດ້ຄ່ອຍຈັດຕັ້ງ ເປັນກຸ່ມຜະລິດ, ເປັນສະຫະກອນ ກວມເຖິງຫຼາຍພັນຄອບຄົວ ເຊັ່ນຕົວຢ່າງ ກຸ່ມ ຂອງ IDP, ບໍລິສັດວັນນິດາ ແລະ ສະຫະກອນ ພັດທະນາກະສິກຳແຂວງຄຳມ່ວນ. ການທົດລອງ ຫັນເປັນກົນຈັກ ແລະ ນຳໃຊ້ເຕັກນິກໃໝ່ ໄດ້ຢັ້ງຢືນວ່າ ມີຄວາມອາດສາມາດ ເພີ່ມຜະລິດຕະພາບ ໄດ້ຫຼາຍ ແລະ ຫຼຸດຕົ້ນທຶນ, ໂດຍສະເພາະ ຄ່າແຮງງານ ຫຼຸດລົງຈາກ 60% ມາເຫລືອພຽງ 10% ແລະ ຕົ້ນທຶນຜະລິດເຂົ້າ ກໍ່ຫຼຸດ ຈາກ 2300 ຫາ 2500 ກີບ/ກລເຂົ້າເປືອກ ມາເຫຼືອພຽງ 1400-1900 ກີບ/ກລ ເຂົ້າເປືອກ.

## ຕົວຢ່າງທົດລອງ ຢູ່ ແຂວງ ຄຳມ່ວນ

**ຂໍ້ມູນສະເລ່ຍ ໄລລ່ຽງ: ຕົ້ນທຶນ, ຜົນຜະລິດ, ລາຍໄດ້, ກຳໄລ, ຄິດເປັນ ເປີເຊັນກຳໄລ ການຜະລິດເຂົ້າເປັນສິນຄ້າ ໂດຍການນຳໃຊ້ກົນຈັກ ດ້ວຍຫຼາຍເຕັກນິກ**

| ລດ | ເຕັກນິກການປູກເຂົ້າ | ຕົ້ນທຶນ (ກີບ) | ຜົນຜະລິດ ກກ/ຮຕ | ລາຍໄດ້ (ກີບ)/ຮຕ | ກຳໄລ (ກີບ)/ຮຕ | ຄິດເປັນເປີເຊັນກຳໄລ |
|---|---|---|---|---|---|---|
| 1 | ປູກເຂົ້າແບບຫວ່ານເຫົ້ງ (ລົດໄຖນຫຽມດິນ, ພົ່ນເມັດພັນ, ຝຸ່ນ, ລົດກ່ຽວເຂົ້າ) | 3,396,177 | 1,999 | 3,830,084 | 433,907 | 12.78 |
| 2 | ປູກເຂົ້າແບບກົນຈັກ (ລົດໄຖນຫຽມດິນ, ລົດດຳນາ, ລົດກ່ຽວເຂົ້າ) | 4,381,073 | 3,500 | 6,706,000 | 2,324,927 | 53 |
| 3 | ປູກເຂົ້າແບບປັບປຸງນາໄຮ່ໃຫຍ່ (ລົດໄຖນາປັບ, ດຳນາດ້ວຍລົດ, ລົດກ່ຽວເຂົ້າ) | 5,540,000 | 4,026 | 7,713,816 | 2,173,816 | 39 |
| 4 | ປູກເຂົ້າແບບຫວ່ານປຽກ (ລົດໄຖນຫຽມດິນ, ຄົນຫວ່ານເມັດພັນ-ຝຸ່ນ, ລົດກ່ຽວເຂົ້າ) | 4,808,387 | 4,015 | 7,692,740 | 2,884,353 | 59 |

- <u>ວຽກຊົນລະປະທານ</u>: ເຂດຊົນລະປະທານ ຖືເປັນຈຸດສຸມ ການຜະລິດເຂົ້າ ແລະ ພືດ ແບບເປີດກ້ວາງ, ທັນສະໄໝ ແລະ ເປັນເຂດທີ່ມີການຈັດຕັ້ງກຸ່ມ ເປັນສ່ວນໃຫຍ່. ເນື້ອທີ່ສະໜອງນໍ້າຊົນລະປະທານ ໃນປະຈຸບັນ ມີທັງໝົດ 279.700 ເຮັກຕາ ສໍາລັບການຜະລິດລະດູຝົນ ປີ 2018 (ໃນນີ້ປູກເຂົ້າ 253.249 ເຮັກຕາ ແລະ ພືດ 26.451 ເຮັກຕາ) ແລະ ສ□າລັບການຜະລິດລະດູແລ້ງ ສົກປີ 2017-2018 ມີ 156.000 ເຮັກຕາ ໂດຍປູກເຂົ້າ 90.000 ເຮັກຕາ ແລະ ພືດ 66.000 ເຮັກຕາ ປະຕິບັດໄດ້ຕາມແຜນການ. ສໍາລັບ ການຈັດຕັ້ງກຸ່ມ ແລະ ສະມາຄົມນໍາໃຊ້ນໍ້າ ມີທັງຫມົດ 2.438 ກຸ່ມ, ໃນນີ້ ກຸ່ມທີ່ເຂັ້ມແຂງ ໃນການຄຸ້ມຄອງ ການສະຫນອງນໍ້າ ແລະ ລະບາຍນໍ້າ ມີພຽງ 59 ກຸ່ມ, ປານກາງ 1.436 ກຸ່ມ ແລະ ອ່ອນ 988 ກຸ່ມ. ບັນຫາກ່ຽວກັບລະບົບຊົນລະປະທານ ແມ່ນ ມີລະບົບຄອງເໝືອງ ແລະ ຈັກສູບນໍ້າເປ່ເພຫຼາຍ ເຖິງ 30-40% ແລະ ບໍ່ໄດ້ບົວລະບັດ-ສ້ອມແປງເທົ່າທີ່ຄວນ ຊຶ່ງເປັນເຫດເຮັດໃຫ້ການສິ້ນເປືອງ ຄ່ານໍ້າສູງກ່ວາປົກກະຕິ ແລະ ສົມທົບກັບຄ່າໄຟຟ້າທີ່ແພງ, ຄ່າສິ້ນເປືອງນໍາໃຊ້ນໍ້າຊົນລະປະທານ ມີເຖິງ 1.000.000-1.500.000 ກີບ ຕໍ່ເຮັກຕາ ຈາກ ປົກກະຕິທໍາມະດາ 600.000-800.000 ກີບ ຕໍ່ເຮັກຕາ ໃນສະພາບລະບົບຊົນລະປະທານຢູ່ໃນສະພາບນ□າໃຊ້ດີປົກກະຕິ. ຮອດປີ 2025, ໄດ້ກໍານົດ ໂຄງ ການຈຸດສຸມຊົນລະປະທານ ເຖິງ 30 ແຫ່ງ ໂດຍມີໂຄງການຊ່ວຍເຫລືອ 11 ແຫ່ງ ແລະ ໂຄງການລົງທຶນພາຍໃນ 19 ໂຄງການ ຊຶ່ງມີງົບປະມານເຖິງ 2.636 ຕື້ກີບ. ຄວາມຄືບຫນ້າປະຕິບັດໂຄງການພາຍໃນ ມີພຽງ 20-30% ແລະ ນອກນີ້, ທຶນສ້ອມແປງ ແລະ ປ່ຽນຖ່າຍຈັກ ກໍ່ບໍ່ໄດ້ຕາມແຜນກໍານົດ 20 ຕື້ກີບ/ປີ ຊຶ່ງເປັນເຫດສໍາຄັນເຮັດໃຫ້ການປູກເຂົ້າ ເລີ່ມມີທ່າອ່ຽງຫລຸດລົງໃນແຕ່ລະປີ.

  ວຽກງານຄວບຄຸມ ແລະ ຫຼຸດຜ່ອນໄພພິບັດ: ສໍາລັບ ການຟື້ນຟູ-ສ້ອມແປງ ລະບົບຊົນລະປະທານ ທີ່ໄດ້ຮັບຜົນກະທົບ ຈາກ ໄພພິບັດທໍາມະຊາດ ໃນປີ 2018 ຜ່ານມາ ລວມມີ 11 ແຂວງ ຈໍານວນ 242 ໂຄງການ ຊຶ່ງໄດ້ຮັບງົບປະມານ ຈາກ ລັດຖະບານ ຈໍານວນ 40 ຕື້ກີບ ໃນນັ້ນ 5 ຕື້ກີບ ສໍາລັບ ແນວພັນ, 35 ຕື້ກີບ ສໍາລັບ ຟື້ນຟູ-ສ້ອມແປງຊົນລະປະທານ ຊຶ່ງມາຮອດປະຈຸບັນແມ່ນ ສໍາເລັດການຟື້ນຟູ ສ້ອມແປງແລ້ວ. ການຟື້ນຟູ-ສ້ອມແປງ ດັ່ງກ່າວ ກໍ່ເພື່ອເລັ່ງໃສ່ການຜະລິດທົດແທນ ຜົນຂອງການເສຍຫາຍ ຈາກໄພພິບັດ ໃນປີຜ່ານມາ (ຄາດໝາຍສູ້ຊົນ ສູງກວ່າທຸກປີຄື: ນາແຊງ ໃຫ້ໄດ້ 100.000 ເຮັກຕາ, ປູກພືດເປັນສິນຄ້າ ໃຫ້ໄດ້ 185.000 ເຮັກຕາ; ລະດູນາປີ 2019 ໃຫ້ໄດ້ 850.000 ເຮັກຕາ ເພີ່ມຂຶ້ນຈາກປີ 2018 ແມ່ນ 40.000 ເຮັກຕາ ຄາດໝາຍທີ່ໄດ້ກ□ານົດວາງນັ້ນແມ່ນບົນພື້ນຖານ ຄວາມເປັນເອກະພາບ ກັບ ທ້ອງຖິ່ນ).

  ນອກນັ້ນ, ໃນໄລຍະ ເກີດໄພພິບັດ ນໍ້າຖ້ວມນັ້ນ, ພວກເຮົາ ກໍ່ໄດ້ລົງສົມທົບ ກັບທ້ອງຖິ່ນ ເພື່ອກໍາໄດ້ສະພາບ ການຖ້ວມໃນເຂດຕ່າງໆ ແລະ ໄດ້ເອົາຂໍ້ມູນມາ ສ້າງແຜນທີ່ ເຂດຖືກນໍ້າຖ້ວມ ແລະ ກໍານົດວາງແຜນປ້ອງກັນ ພ້ອມທັງ ປະເມີນຜົນເສຍຫາຍ ໂດຍການປະສານສົມທົບກັບ ກະຊວງ ກ່ຽວຂ້ອງ ແລະ ບໍລິສັດເຂື່ອນໄຟຟ້າ ຕ່າງໆ ໂດຍສະເພາະ ເຂື່ອນໄຟຟ້າ ນໍ້າງື່ມ, ນໍ້າມັງ, ນໍ້າລີກ ທີ່ມີການລະບາຍນໍ້າອອກ.
- <u>ວຽກກະສິກໍາສະອາດ:</u> ຜ່ານມາ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງກ່ຽວຂ້ອງ ທີ່ຕິດພັນ ກັບໂຄງການ ສົ່ງເສີມການຜະລິດເປັນສິນຄ້າ ແລະ ຄໍ້າປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ແມ່ນໄດ້ອອກຫຼາຍກົດໝາຍ ແລະ ນິຕິກໍາ ລຸ່ມກົດໝາຍ ທີ່ໄດ້ສົ່ງເສີມ, ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຂອງ ການຜະລິດ ກະສິກໍາ ຢ່າງຮອບດ້ານ ສົມຄວນ. ເວົ້າສະເພາະ ກະຊວງ ກະສິກໍາ ແລະ ປ່າໄມ້ ໄດ້ເອົາ ໃຈໃສ່ ຜັນຂະຫຍາຍມາ ເປັນຫຼາຍ ນິຕິກໍາ ລຸ່ມກົດໝາຍ, ເປັນ ດໍາລັດ, ຄໍາສັ່ງ ຂອງນາຍົກລັດຖະມົນຕີ, ຂໍ້ຕົກລົງ ລັດຖະມົນຕີ, ຂໍ້ຕົກລົງ ບັນດາກົມກ່ຽວຂ້ອງ, ບົດແນະນໍາລະອຽດ ແລະ ຄູ່ມືຕ່າງໆ ເພື່ອຊ່ວຍຈັດຕັ້ງ ແຕ່ລະນິຕິກໍາ ຢ່າງເປັນເອກະພາບ ໃນລະດັບ ທົ່ວປະເທດ ລະອຽດ ເຊັ່ນ: ນິຕິກໍາ ກ່ຽວກັບ ການຄຸ້ມຄອງ ແລະ ຄວບຄຸມ ການນໍາໃຊ້ປຸ໋ຍ ແລະ ຢາປາບສັດຕູພືດ ທຸກປະເພດ ແລະ ກໍ່ໄດ້ ດໍາເນີນການ ຢ່າງເຂັ້ມງວດ ກ່ວາເກົ່າ, ໂດຍສະເພາະ ກ່ຽວກັບ ການປູກກ້ວຍ ໃນນີ້ ອັນພົ້ນເດັ່ນ ແມ່ນວຽກກັກກັນພືດ ຕິດພັນກັບ ການເຈລະຈາ ບັນຊີພືດ ທີ່ສາມາດ ສົ່ງອອກໄດ້, ຕົ້ນຕໍ ແມ່ນສົ່ງອອກໄປ ສສ ຫວຽດນາມ, ສປ ຈີນ, ໄທ ແລະ ສະຫະພາບ ເອີຣົບ ຊຶ່ງບັນຫານີ້ ເປັນປັດໃຈ ອັນສ□າຄັນ ໃນການປະຕິບັດ ມາດຕະການ ໃນການ ປົກປ້ອງ ການຄ້າພາຍໃນ ແລະ ການສົ່ງອອກ ຂອງພວກເຮົາສູ່ຕະຫຼາດຕ່າງປະເທດ; ມາຮອດປະຈຸບັນ ພວກເຮົາ ສາມາດ ເຈລະຈາ ເຕັກນິກ ເປີດຕະຫຼາດ ກັບບັນດາ ປະເທດ ດັ່ງລຸ່ມນີ້:

1) **ສປ ຈີນ** ມາຮອດປັດຈຸບັນນີ້, ໄດ້ສໍາເລັດການເຈລະຈາເຕັກນິກເປີດຕະຫຼາດ ກັບ ສປ ຈີນ ໄດ້ຈໍານວນ 5 ພືດ ຄື: ສາລີແຂງ, ມັນຕົ້ນ, ໝາກກ້ວຍ, ໝາກໂມ ແລະ ເຂົ້າສານ ແລະ ກໍາລັງສືບຕໍ່ເຈລະຈາເຕັກນິກເປີດຕະຫຼາດຕື່ມ ອີກ 10 ພືດ ເຊັ່ນ: ຢາງພາລາ, ໝາກນໍ້າມັນ, ພືດຜັກ ຊຶ່ງຄາດວ່າຈະສໍາເລັດເຊັນບົດບັນທຶກ SPS ສອງຝ່າຍ ໃນປີ 2019 ແລະ ກໍາລັງກະກຽມເຊັນຂໍ້ຕົກລົງວ່າດ້ວຍຂໍ້ກໍານົດການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ທີ່ຈະສົ່ງຈາກ ສປປລາວ ໄປ ສປ ຈີນ,
2) **ລາດຊະອານາຈັກໄທ**: ເລີ່ມແຕ່ປີ 2013 ເຖິງ 2018, ໄດ້ສໍາເລັດການເຈລະຈາເຕັກນິກເປີດຕະຫຼາດ ກັບ ກົມວິຊາການກະເສດ, ລາຊະອານາຈັກໄທ ລວມທັງໝົດມີ 15 ພືດ ແລະ ສໍາເລັດແລ້ວ 12 ພືດ ເຊັ່ນ: ສາລີແຂງ, ໝາກກ້ວຍ, ໝາກເຜັດ, ໝາກຮຸ່ງ, ມັນຕົ້ນ, ໝາກເລັ່ນ, ຫົວມັນຝະຣັ່ງ, ໃບຢາສູບແຫ້ງ, ພືດຜັກສົດ, ພືດຕະກຸນໝາກກ້ຽງ ອື່ນໆ, ໝາກຖົ່ວດິນ (ຝັກຖົ່ວດິນ ຫຼື ໝາກຖົ່ວດິນ ທີ່ມີເປືອກຫຸ້ມແກ່ນ ແລະ ບໍ່ມີດິນຕິດ) ແລະ ໝາກນອດ. ປັດຈຸບັນນີ້, ກໍາລັງສືບຕໍ່ເຈລະຈາ ຈໍານວນ 3 ພືດ ທີ່ຍັງຄ້າງນັ້ນ ເຊັ່ນ: ແກ່ນໝາກຖົ່ວດິນ, ໝາກສະຕໍເບີຣີ ແລະ ໝາກມັດ, ຄາດວ່າຈະສໍາເລັດພາຍໃນປີ 2019.
3) **ສສ ຫວຽດນາມ**: ມາຮອດປັດຈຸບັນນີ້, ໄດ້ສໍາເລັດການເຈລະຈາເຕັກນິກເປີດຕະຫຼາດ ກັບ ກົມປ້ອງກັນພືດ, ສສ ຫວຽດນາມ ໄດ້ທັງໝົດ 13 ພືດ ຄື: ເຂົ້າສານ, ສາລີ, ຫົວກາຣົດ, ຜັກສະຫລັດ, ຜັກບົ່ວຫົວ, ຫຍ້ານີເປຍ, ໝາກກ້ວຍ, ໝາກມັງກອນ, ໝາກນອດ, ໝາກກ້ຽງໃຫ່ຍ (ໝາກຟຸກ), ໝາກ້ຽງເຫຼືອງ, ໝາກ້ຽງຂຽວ, ໝາກມ່ວງ ແລະ ປັດຈຸບັນນີ້ ກ□າລັງສືບຕໍ່ເຈລະຈາມີເປີດຕະຫຼາດໝາກໄມ້ໃຫ້ໝາກ ຈໍານວນ 04 ພືດໃໝ່ ຕື່ມອີກ ເຊັ່ນ: ໝາກມີ້, ໝາກມັດ, ລໍາໃຍ, ແລະ ໝາກພ້າວຫອມ.
4) **ສະຫະພາບເອີລົບ (ອີຢູ)**: ປັດຈຸບັນ, ພືດ ແລະ ຜະລິດຕະພັນ ພືດ ຂອງ ສປປ ລາວ ສາມາດສົ່ງອອກໄປຍັງ ອີຢູ ໄດ້ປົກກະຕິ ແຕ່ຕ້ອງປະຕິບັດຕາມ ຄູ່ມືແນະນໍາ ຂອງ ກົມປູກຝັງ ກ່ຽວກັບ ຂັ້ນຕອນ ແລະ ວິທີຈັດຕັ້ງປະຕິບັດ ມາດຕະການ ສຸຂານາໄມພືດ (SPS) ສໍາລັບ ພືດ ແລະ ຜະລິດຕະພັນພືດ ທີ່ສົ່ງອອກ ໄປຍັງ ອີຢູ ຊຶ່ງມາຮອດປັດຈຸບັນ ມີ 02 ບໍລິສັດ ທີ່ໄດ້ຮັບອະນຸຍາດ ໃຫ້ສົ່ງອອກ ພືດຜັກສົດ ຈາກ ສປປ ລາວ ໄປຍັງ ອີຢູ.

**ອັນທີ 2: ວຽກງານ ຄຸ້ມຄອງ ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້**

ຂະແໜງປ່າໄມ້ ກໍາລັງຫັນ ໄປສູ່ ການກໍານົດ ນະໂຍບາຍໃໝ່ ຊຶ່ງ ເນັ້ນໃສ່ ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ປ່າໄມ້, ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ອື່ນໆ ແບບມີຄວາມຍືນຍົງ ເປັນການປະກອບສ່ວນຢ່າງແຂງແຮງ ເຂົ້າໃນການຈັດຕັ້ງປະຕິບັດ ແລະ ບັນລຸຜົນ ຕາມແຜນພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ ຄັ້ງທີ 8 ອັນເປັນຈຸດຫັນປ່ຽນ ທິດທາງ ການພັດທະນາ ຂອງຊາດ ອັນສໍາຄັນ ໂດຍບໍ່ເອື່ອຍອີງໃສ່ແຕ່ ການນໍາໃຊ້ ຊັບພະຍາກອນທໍາມະຊາດ ແບບຟຸມເຟືອຍ, ແນ່ໃສ່ຫຼຸດຜ່ອນ ການຂຸດຄົ້ນໄມ້ ທໍາມະຊາດ ແຕ່ຢ່າງດຽວ ກ້າວໄປສູ່ ການສົ່ງເສີມ ແລະ ພັດທະນາ ລະບົບ ປູກແຕ່ງໄມ້ ທີ່ທັນສະໄໝ ແລະ ຫຼາກຫຼາຍຮອບດ້ານ ໂດຍສະເພາະ ແມ່ນ ການສົ່ງເສີມ ການປົກປັກຮັກສາ ລະບົບ ປ່າໄມ້ ທັງ 3 ປະເພດປ່າ ແລະ ປ່າໄມ້ບ້ານ ຕິດພັນກັບ ການສົ່ງເສີມ ອຸດສະຫະກໍາ ການທ່ອງທ່ຽວ ທໍາມະຊາດ ເປັນເສົາຄໍ້າ ເສດຖະກິດ ອັນໃໝ່ ໃນການສ້າງ ມູນຄ່າເພີ່ມ ທີ່ມີລັກສະນະຍືນຍົງ ຫຼາຍກວ່າ ຊຶ່ງທິດທາງ ນະໂຍບາຍ ອັນໃໝ່ ນີ້ ເປັນປັດໃຈພື້ນຖານ ໃນການ ປະຕິບັດ ນະໂຍບາຍ ການພັດທະນາ ແບບຍືນຍົງ ຕາມທິດທາງ ການເຕີບໂຕສີຂຽວ ຂອງ ພັກ ແລະ ລັດຖະບານລາວ. ທັງນີ້ ກໍ່ເພື່ອ ເພີ່ມອັດຕາ ການປົກຫຸ້ມ ແລະ ການຈັດຕັ້ງປະຕິບັດ ແຜນງານຫຼຸດ ຜ່ອນອາຍພິດ ເຮືອນແກ້ວ ຈາກການທໍາລາຍ ປ່າໄມ້ (REDD) ເພື່ອຍູ້ແຮງ ວຽກງານປ້ອງກັນປ່າ, ການປູກໄມ້ ແລະ ຟື້ນຟູປ່າ ຕາມທິດເຕີບໂຕສີຂຽວ ຍືນຍົງ.

ອີກປະເດັນໜຶ່ງ ທີ່ປະກອບສ່ວນ ໃນການ ປົກປັກສາ ປ່າໄມ້ ທໍາມະຊາດ ຕິດພັນກັບ ອະນຸລັກ ຄວາມຫຼາກຫຼາຍ ດ້ານຊີວະນານາພັນ ກໍ່ຄື ການປະຕິບັດນະໂຍບາຍ ແລະ ຍຸດທະສາດ ການເຕີບໂຕສີຂຽວ ແລະ ສົ່ງເສີມການທ່ອງທ່ຽວ ທໍາມະຊາດ ພວກເຮົາ ໄດ້ສໍາເລັດ ການສ້າງ ສວນອຸທິຍານ ແຫ່ງຊາດ ນາກາຍ-ນໍ້າເທີນ ແລະ ນໍ້າແອັດ-ພູເລີຍ ຊຶ່ງ ລັດຖະບານ ໄດ້ອອກດໍາລັດ ສະບັບເລກທີ 35/ນຍ ແລະ 36/ນຍ, ລົງວັນທີ 15 ກຸມພາ 2019 ແລະ ຕິດພັນກັບນີ້ ກະຊວງ ກະສິກໍາ ແລະປ່າໄມ້ ໄດ້ຮັບຮອງເອົາ ຂໍ້ແນະນໍາ ດ້ານວິຊາການ ກ່ຽວກັບ ການຄຸ້ມຄອງສວນອຸທິຍານ ແຫ່ງຊາດ 7 ສະບັບ ເພື່ອຜັນຂະຫຍາຍ 2 ດໍາລັດ ດັ່ງກ່າວ ຊຶ່ງຈະເປັນຜົນປະໂຫຍດ ສໍາລັບ ການປົກປັກຮັກສາ ເຂດປ່າໄມ້ ແບບຍືນຍົງຢ່າງແທ້ຈິງ ແລະ ທັງເປັນການ ຮັບປະກັນ ແຫຼ່ງນໍ້າ ທີ່ໝັ້ນຄົງ ໃຫ້ແກ່ ການ

ບໍລິໂພກ (ໂຮງງານ ນ້ຳດື່ມ ແຮ່ທຳມະຊາດ ໃນອານາຄົດ), ການຜະລິດກະສິກຳ, ການຜະລິດໄຟຟ້າ ແລະ ທີ່ສຳຄັນ ແມ່ນ ຈະເປັນເງື່ອນໄຂ ໃນການ ພັດທະນາ ອຸດສະຫະກຳ ທ່ອງທ່ຽວ ຊຶ່ງຈະເປັນຖານ ແຫຼ່ງລາຍຮັບໃໝ່ ໃຫ້ ປະເທດ ແລະ ສ້າງອາຊີບໃໝ່ ທີ່ໝັ້ນຄົງ ໃຫ້ຊາວຊົນນະບົດ ຢູ່ ເຂດອ່າງຮັບນ້ຳ.

ພ້ອມນີ້, ລັດຖະບານ ກໍ່ໄດ້ອອກ ຄຳສັ່ງ ສະບັບເລກທີ 09/ນຍ, ເພື່ອເພີ່ມທະວີ ປະສິດທິພາບ ແລະ ຄວາມ ຮັດກຸມ ໃນວຽກງານ ການນຳໃຊ້ ທີ່ດິນ ເຂົ້າໃນ ວຽກງານ ພັດທະນາ ກະສິກຳ ແລະປ່າໄມ້ ໂດຍສະເພາະ ການສົ່ງ ເສີມ ການລົງທຶນ ປູກໄມ້ ອຸດສາຫະກຳ ໃຫຍ່ໄວ ເຊັ່ນ: ໄມ້ວິກ ແລະ ກະຖິນນະໂລງ ໃນທີ່ດິນ ປ່າຜະລິດ ແຫ່ງ ຊາດ ທີ່ຊຸດໂຊມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ກໍ່ໄດ້ອອກ ຂໍ້ແນະນຳ ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງດັ່ງກ່າວ ໃຫ້ມີປະສິດທິຜົນສູງ.

ຄຽງຄູ່ກັນນັ້ນ, ການປະຕິບັດ ຄຳສັ່ງ ເລກທີ 15/ນຍ ແມ່ນໄດ້ດຳເນີນ ຢ່າງເຂັ້ມງວດ ໃນການກວດກາ, ຢຶດ, ກັກ, ປະຕິບັດວິໄນ ເຮັດໃຫ້ ຮັກສາໄດ້ ຄວາມສະຫງົບ. ແຕ່ໃນເງື່ອນໄຂ ປະຈຸບັນ ຈະຫ້າມ ແຕ່ຢ່າງດຽວ ກໍ່ເບິ່ງຄື ບໍ່ມີການສົ່ງເສີມ ຕາມທິດໃໝ່ ຂອງພັກ ແລະ ລັດຖະບານ. ດັ່ງນັ້ນ, ກະຊວງ ກໍ່ໄດ້ ເລັ່ງປັບປຸງ ດຳລັດ ສະບັບເລກ ທີ 96/ນຍ ເພື່ອເພີ່ມທະວີ ການສົ່ງເສີມ ການປູກໄມ້ ແລະ ຜັນຂະຫຍາຍ ຄຳສັ່ງ ສະບັບເລກທີ 09/ນຍ ແລະ ຄົ້ນຄວ້າ ສ້າງນະໂຍບາຍ ທີ່ເອື້ອອຳນວຍ ການສົ່ງເສີມ ປູກໄມ້ ເປັນສິນຄ້າ ໃນເຂດປ່າໄມ້ ຊຸດໂຊມ ແລະ ກໍ່ເລັ່ງ ປັບປຸງ ກົດໝາຍປ່າໄມ້ ສະບັບປີ 2007 ເພື່ອໃຫ້ ສອດຄ່ອງ ກັບເງື່ອນໄຂ ປະຈຸບັນ ໝາຍວ່າ ທັງສືບຕໍ່ປະຕິບັດ ລະບຽບ ກົດໝາຍ ຢ່າງເຂັ້ມງວດ ແລະ ຊຸກຍູ້ ສົ່ງເສີມ ທ່າແຮງ ບົ່ມຊ້ອນ ເຊັ່ນ: ການພັດທະນາ ລະບົບ ການຄ້ຳ ປະກັນ ໄມ້ຖືກກົດໝາຍ ຂອງລາວ ອັນເປັນເຄື່ອງມື ສຳຄັນ ໃນການ ກຳຈັດ ການຄ້າ-ຂາຍໄມ້ ແບບຜິດກົດໝາຍ, ທັງເປັນເງື່ອນໄຂ ສຳລັບການສົ່ງອອກ ຜະລິດຕະພັນໄມ້ ຖືກກົດໝາຍ ຂອງລາວ ເຂົ້າສູ່ຕະຫຼາດສາກົນ ທີ່ ສາມາດ ສ້າງລາຍຮັບສູງກວ່າ ຊຶ່ງເປັນເຄື່ອງມືຢັ້ງຢືນ ໄມ້ປູກແລະ ໄມ້ທຳຊາດ.

ນອກນີ້, ກໍ່ໄດ້ ຈັດຕັ້ງຜັນຂະຫຍາຍ ຄຳສັ່ງ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018 ໃນການຄຸ້ມ ຄອງ ແລະ ການກວດກາ ສັດປ່າ ແລະ ພືດປ່າ ປະເພດ ຫວງຫ້າມ ທີ່ໃກ້ຈະສູນພັນ ໃຫ້ມີຄວາມສັກສິດ ຊຶ່ງເປັນ ການ ປະຕິບັດ ສັນຍາ ແລະ ລະບຽບ ສາກົນ ວາງໄວ້ ທີ່ ສປປ ລາວ ເຮົາເປັນພາຄີ ຊຶ່ງ ພວກເຮົາ ກໍ່ສຳເລັດ ການ ແກ້ໄຂບັນຫາ ທີ່ຄົງຄ້າງ ກ່ຽວກັບ ການປະຕິບັດ ສົນທິສັນຍາ ໄຊເຕັສ (CITES) ທີ່ສະສົມມາຍາວນານ ຈຳນວນ ທັງໝົດ 36 ຂໍ້ ຊຶ່ງສາມາດແກ້ໄຂໄດ້ແລ້ວ 30 ຂໍ້ ແລະ ຍັງຕ້ອງໄດ້ສືບຕໍ່ແກ້ໄຂຕື່ມອີກ 6 ຂໍ້ ຊຶ່ງມາຮອດປະຈຸບັນ ແມ່ນ ໄດ້ຖືກ ຍົກອອກ ຈາກ ບັນຊີ ເຝົ້າລະວັງປະເທດ ທາງຜ່ານ ໃນການ ຄ້າຂາຍ ສິ້ນສ່ວນ ສັດປ່າ ຫ້ວງຫ້າມ ເຊັ່ນ: ຜະລິດຕະພັນງາຊ້າງ ແລະ ຄ້າຍຄື ງາຊ້າງ ແລະ ນໍແຮດ ແລະ ອື່ນໆ.

**ອັນທີ 3: ວຽກງານ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ**

ໃນຊຸມປີຜ່ານມາ ພັກ ແລະ ລັດຖະບານ, ບັນດາ ຂະແໜງການ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ ໄດ້ສຸມຄວາມພະຍາຍາມ ໃນການ ຊີ້ນຳ-ນຳພາ, ລົງທຶນ ພັດທະນາ ເປັນຈຳ ນວນຫຼາຍ, ທັງຈັດຕັ້ງກຳລັງ ໃນການຈັດຕັ້ງປະຕິບັດ ໃນຂອບເຂດ ທົ່ວປະເທດ ດ້ວຍມາດຕະຖານ ຕ່າງໆ ດັ່ງນັ້ນ ຈຶ່ງໄດ້ມີຜົນສຳເລັດ ໃນຫຼາຍດ້ານ ເຂົ້າໃນ ການພັດທະນາ ປະເທດຊາດ

ມີ 5.179 ຄອບຄົວ ໄດ້ຫຼຸດພົ້ນອອກຈາກ ຄອບຄົວທຸກຍາກ ຕື່ມອີກ ຍັງເຫຼືອ 64.593 ຄອບຄົວ, ກວມ 5,34% ຂອງຈຳນວນ ຄອບຄົວທັງໝົດ ໃນທົ່ວປະເທດ ໃນນັ້ນ ສາມາດລຶບລ້າງ ບ້ານທີ່ມີຄອບຄົວທຸກຍາກ ຫຼາຍ ກວ່າ 50% ຂຶ້ນເມືອ ຂອງຈຳນວນຄອບຄົວ ທັງໝົດ ພາຍໃນບ້ານ ໄດ້ 22 ບ້ານ ຈາກ 678 ບ້ານ ໃນປີ 2016, ຍັງເຫຼືອ 657 ບ້ານ ໃນປີ 2018; ສາມາດລຶບລ້າງ ບ້ານທຸກຍາກ ໄດ້ 120 ບ້ານ ຍັງເຫຼືອ 1.536 ບ້ານ, ກວມ 18,83% ຂອງຈຳນວນບ້ານ ທັງໝົດ. ສ້າງບ້ານພັດທະນາໄດ້ 221 ບ້ານ ເປັນ 4.138 ບ້ານ ໃນປີ 2018; ສ້າງ ບ້ານໃຫຍ່ທີ່ມີລັກສະນະຕົວເມືອງນ້ອຍໃນຊົນນະບົດ ໄດ້ 25 ບ້ານ ເປັນ 56 ບ້ານໃນປີ 2018.

ຜ່ານການຈັດຕັ້ງປະຕິບັດ ກໍ່ໄດ້ມີ ຫຼາຍແບບຢ່າງ ທີ່ດີ ເພື່ອເປັນບົດຮຽນ ໃຫ້ແກ່ ພວກເຮົາ ໃນການ ກຳນົດ ນະໂຍບາຍ, ວິທີຈັດຕັ້ງປະຕິບັດ ວຽກງານ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນປະເທດເຮົາ ໃນ ຊຸມປີຕໍ່ໜ້າ ເຊັ່ນ: ການທົດລອງສ້າງບ້ານແບບຢ່າງ ໃນການຈັດຕັ້ງປະຕິບັດທິດນຳ 3 ສ້າງ; ການສ້າງບ້ານຈຸດສຸມ ພັດທະນາຊາຍແດນ ຮ່ວມມື ລາວ-ຫວຽດນາມ ຢູ່ 4 ແຂວງ, 5 ເມືອງ; ບ້ານເປົ້າໝາຍ ທຸກຍາກ ບ້ານແບບຢ່າງ ໃນ ການຈັດສັນ ພູມລຳເນົາ ແລະ ອາຊີບ ຕິດພັນກັບ ການປົກປັກຮັກສາ ຊາຍແດນ; ບ້ານ ແລະ ເມືອງ ເປົ້າໝາຍ ໃນ ການ ປະຕິບັດກອງທຶນຫຼຸດຜ່ອນ ຄວາມທຸກຍາກ ຂອງ ທະນາຄານໂລກ; ໂຄງການ ສ້າງບ້ານຊົນນະບົດໃໝ່ ຕາມ ຫຼັກ ແຊເມົາອຶນດົງ ຂອງ ສ. ເກົາຫຼີ ຢູ່ 30 ບ້ານ ຂອງ ແຂວງ ວຽງຈັນ ແລະ ສະຫວັນນະເຂດ; ບ້ານແບບຢ່າງ ໃນ

ການ ແກ້ໄຂຄວາມທຸກຍາກ ດ້ວຍລັດ, ຜູ້ປະກອບການ ແລະ ປະຊາຊົນ ຮ່ວມກັນເຮັດ (ທ່ານ ເກຍ ປະທານ ບໍລິສັດ ນ້ຳດື່ມ ປາໂລມາ) ຢູ່ ບ້ານ ຄ□ປາແໜ ເມືອງຈຳພອນ ແຂວງ ສະຫວັນນະເຂດ; ການຍົກຍ້າຍ ຈັດສັນພູມລຳເນົາໃໝ່ ແລະ ສ້າງອາຊີບໝັ້ນຄົງ ໃຫ້ແກ່ ປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກ ໂຄງການ ພັດທະນາ ຂອງລັດ ແລະ ພາກເອກະຊົນ ຈ□ນວນ ໜຶ່ງຢູ່ທ້ອງຖິ່ນ, ແບບຢ່າງໃນການຍົກຍ້າຍ ຈັດສັນພູມລຳເນົາ ຄົງທີ່ ໃຫ້ປະຊາຊົນ ທີ່ທຳມາຫາກິນເລື່ອນລອຍ ຢູ່ເຂດພູດອຍ ຊົນເຜົ່າ ໃຫ້ມີອາຊີບ ທີ່ໝັ້ນຄົງ ຢູ່ຫຼາຍທ້ອງຖິ່ນ; ມີວຽກເຮັດງານທຳ ສ້າງອາຊີບໃໝ່ ແກ້ໄຂຄວາມທຸກຍາກ ຕິດພັນກັບ ການລົງທຶນ ໂດຍກົງ ຂອງພາກເອກະຊົນ ທາງດ້ານ ກະສິກຳ ປ່າໄມ້ ແລະ ການບໍລິການ ຈ□ານນວນໜຶ່ງ ແລະ ອື່ນໆ.

ແຕ່ໃນໄລຍະຜ່ານມາ, ພວກເຮົາ ຍັງບໍ່ທັນໄດ້ ຄົ້ນຄວ້າວິໄຈ ສະຫຼຸບສັງລວມ ຍອດບົດຮຽນ ດ້ານຕັ້ງໜ້າ ຂອງວຽກ ດັ່ງກ່າວນີ້ ຈາກທັງໝົດ ພຶດຕິກຳຕົວຈິງ ຢູ່ແຕ່ລະທ້ອງຖິ່ນ ເພື່ອໃຫ້ເປັນທິດສະດີ ຊີ້ນຳ ການພັດທະນາ ຊົນນະບົດ ສອດຄ່ອງກັບ ຈຸດພິເສດປະເທດເຮົາ ແລະ ຄວາມຮຽກຮ້ອງຕ້ອງການ ໃນການເຊື່ອມໂຍງ ທາງດ້ານ ເສດຖະກິດ-ສັງຄົມ ເຂົ້າກັບສາກົນ ແລະ ພາກພື້ນ. ພວກເຮົາຍັງມີທ່າແຮງບົ່ມຊ້ອນ ແລະ ກຳລັງແຮງຂອງທົ່ວສັງຄົມ ຫຼາຍຢ່າງ ບໍ່ທັນຖືກລະດົມນຳໃຊ້ ເພື່ອເຂົ້າຮ່ວມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະເທດເຮົາຢ່າງເຕັມສ່ວນ.

**ອັນທີ 4: ດ້ານແຜນການ ແລະ ແຜນງົບປະມານ**

ໂດຍລວມແລ້ວ ການຈັດຕັ້ງປະຕິບັດ ແຜນການ ແລະ ແຜນງົບປະມານ ແມ່ນສາມາດດຳເນີນ ຕາມແຜນການ ຂອງ ບັນດາ ໂຄງການວາງໄວ້, ລວມທັງ ໂຄງການ ລົງຊ່ວຍທ້ອງຖິ່ນ ໃນ 4 ແຜນງານຕົ້ນຕໍ ຊຶ່ງງົບປະມານ ທີ່ໄດ້ຮັບ ທັງໝົດ ໃນປີ 2018 ແມ່ນ 239.115,69 ລ້ານກີບ,ໃນນັ້ນ:

- ເງິນເດືອນ ແລະ ເງິນອຸດໜູນຕ່າງໆ (ພາກ 60) ຈຳນວນ 48.606 ລ້ານກີບ
- ເງິນນະໂຍບາຍ ແລະ ເງິນຊ່ວຍໜູນຕ່າງໆ (ພາກ61) ຈຳນວນ 12.500 ລ້ານກີບ
- ເງິນ ລາຍຈ່າຍບໍລິຫານປົກກະຕິ (ພາກ 62) ຈຳນວນ 8.050 ລ້ານກີບ
- ລາຍຈ່າຍ ດັດສົມ, ສົ່ງເສີມ ແລະ ເງິນບຳລຸງ (ພາກ63) ຈຳນວນ 24.676 ລ້ານກີບ
- ລາຍຈ່າຍ ຊື້ຊັບສົມບັດ ຄົງທີ່ ຮັບໃຊ້ກົງຈັກບໍລິຫານ (ພາກ 66) ມີ 0 ລ້ານກີບ
- ລາຍຈ່າຍ ພາກການລົງທຶນ (ພາກ 67) ຈຳນວນ 145,283.69 ລ້ານກີບ

ສະເພາະພາກການລົງທຶນ ຂອງລັດ (ພາກ 67) ປະຈຳປີ 2018 ມີທັງໝົດ 367 ໂຄງການ ມູນຄ່າລວມ 145.283,69 ລ້ານກີບ ໃນນັ້ນ ໂຄງການ ສົ່ງເສີມ ວິຊາການ 152 ໂຄງການ, ມູນຄ່າ 37.977,60 ລ້ານກີບ ແລະ ໂຄງການ ກໍ່ສ້າງ 215 ໂຄງການ, ມູນຄ່າ 107.306,090 ລ້ານກີບ ຈັດຕັ້ງປະຕິບັດໄດ້ 100% ໃນນັ້ນ:

- ກະສິກຳ ແລະ ປ່າໄມ້ ຈຳນວນ 180 ໂຄງການ ມູນຄ່າ 88.426,77 ລ້ານກີບ.
- ພັດທະນາ ຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ ຈຳນວນ 187 ໂຄງການ ມູນຄ່າ 56.856,92 ລ້ານກີບ.

**ອັນທີ 5: ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ (ຊກພ ODA):**

ການຄຸ້ມຄອງ ການລົງທຶນ ຂອງຕ່າງປະເທດ ທີ່ກຳລັງຈັດຕັ້ງປະຕິບັດ ມີທັງໝົດ 98 ໂຄງການ, ຊຶ່ງປະກອບມີ ສອງພາກສ່ວນຄື: 1). ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ຈຳນວນ 71 ໂຄງການ ມີມູນຄ່າ ທັງໝົດ 732,66 ລ້ານໂດລາ, ໃນນັ້ນ ທຶນຕ່າງປະເທດ ມີ 678,13 ລ້ານໂດລາ, ທຶນພາຍໃນ 54,53 ລ້ານໂດລາ. ບັນດາ ໂຄງການ ດັ່ງກ່າວ ແມ່ນຈັດຕັ້ງປະຕິບັດ ຢູ່ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ໂດຍໄດ້ສຸມໃສ່ ການພັດທະນາ ກະສິກຳ ຕິດພັນກັບ ການປັບປຸງ ຊີວິດການເປັນຢູ່ ຂອງ ປະຊາຊົນ ໃຫ້ດີຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມ ທຸກຍາກ ແລະ 2). ໂຄງການ INGOs ແລະ NGO ຈຳນວນ 25 ໂຄງການ ມູນຄ່າ 29,56 ລ້ານໂດລາ. ສະເພາະໃນປີ 2018 ງົບປະມານ ທີ່ລົງທຶນໃສ່ ວຽກງານ ກະສິກຳ, ປ່າໄມ້ ມີທັງໝົດ ປະມານ 130,01 ລ້ານໂດລາສະຫະລັດ (ທຶນພາຍໃນ 8,19 ລ້ານໂດລາ, ຕ່າງປະເທດ 121,82 ລ້ານໂດລາ) ຊຶ່ງງົບປະມານ ດັ່ງກ່າວ ແມ່ນສຸມໃສ່ ວຽກສ້າງຄວາມເຂັ້ມແຂງ, ພັດທະນາໂຄງລ່າງຂະໜາດນ້ອຍ, ປັບປຸງ ດ້ານການຜະລິດ ກະສິກຳ ເພື່ອໂພຊະນາການ ເປັນຕົ້ນ.

ຊຶ່ງແຫຼ່ງທຶນ ດັ່ງກ່າວ ແມ່ນ ມີຄວາມສຳຄັນຫຼາຍ ໃນການ ຍາດແຍ່ງ ເຂົ້າໃສ່ວຽກ ຈຸດສຸມ ຂອງ ບັນດາແຂວງ ຕາມແຜນພັດທະນາ ຂອງແຂວງ ກໍ່ຄື ຈຸດສຸມພັດທະນາ ຕ່າງໆ ໃນຂອບເຂດ ທົ່ວປະເທດ.

**ອັນທີ 6: ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ (FDI):**

ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ດ້ານການປູກພືດ, ການລ້ຽງສັດ, ການປູກໄມ້ ອຸດສະຫະກຳ ເພື່ອເປັນສິນຄ້າ. ພ້ອມດຽວກັນນີ້ ສືບຕໍ່ ຕິດຕາມ ຊຸກຍູ້ ແລະ ປະເມີນ ຄຸນນະພາບ ຂອງ ການຈັດຕັ້ງປະຕິບັດ ແຜນທຸລະກິດ ຂອງ ບໍລິສັດ ໃຫ້ໄປຕາມ ເນື້ອໃນ ທີ່ໄດ້ຕົກລົງກັນໄວ້ ໃນສັນຍາ ການລົງທຶນ ໂດຍສະເພາະ ບັນດາ ບໍລິສັດ ທີ່ໄດ້ລົງທຶນ ໃນການ ສຳປະທານ ທີ່ດິນ ກະສິກຳ ແລະ ປ່າໄມ້ ທີ່ມີໃນປະຈຸບັນ ມີດັ່ງນີ້:

| ລ/ດ | ຊື່ຂະແໜງການການລົງທຶນພາຍໃນ ແລະ ຕ່າງປະເທດ | ຈຳນວນບໍລິສັດ | ທຶນທັງໝົດ | ທຶນຈົດທະບຽນ | ເນື້ອທີ່ (ເຮັກຕາ) | | |
|---|---|---|---|---|---|---|---|
| | | | | | ເນື້ອທີ່ສຳປະທານ | ເນື້ອທີ່ສົ່ງເສີມ | ລວມ |
| **1** | ປູກຝັງ | 336 | 1,200,205,913 | 749,858,304 | 74,919 | 9,332 | 84,252 |
| **2** | ລ້ຽງສັດ | 190 | 346,549,096 | 222,580,241 | 3,537 | 158 | 3,694 |
| **3** | ປ່າໄມ້ | 263 | 1,808,106,927 | 734,642,341 | 231,468 | 38,364 | 269,832 |
| **4** | ບໍລິການ | 44 | 13,697,888 | 20,901,496 | | | |
| **ລວມ** | | 833 | 3,368,559,824 | 1,727,982,382 | 309,924 | 47,854 | 357,778 |

ໃນກໍລະນີ, ການລົງທຶນຂອງຜູ້ປະກອບການພາຍໃນ ແລະ ຕ່າງປະເທດ (FDI) ກໍ່ມີການລົງທຶນໃສ່ ຂະແໜງ ການ ກະສິກຳ ແລະ ປ່າໄມ້ ຫຼາຍສົມຄວນ ຄືດັ່ງກ່າວມາຂ້າງເທິງນັ້ນ, ແຕ່ຜ່ານການຕີລາຄາ ເຫັນວ່າ ການລົງທຶນບໍ່ມີຈຸດສຸມ, ມີຫຼາຍໂຄງການ ບໍ່ປະຕິບັດຕາມລະບຽບການລົງທຶນ ກ່ຽວກັບ ການຈັດສັນເຂດພື້ນທີ່ລົງທຶນ, ໂຄງການ ເຊົ່າ ແລະ ສຳປະທານ ທີ່ດິນລັດ ສ່ວນໃຫຍ່ ແມ່ນສຸມໃສ່ເຂດອ້ອມແອ້ມເທດສະບານແຂວງ ທີ່ມີເສັ້ນທາງຄົມມະນາຄົມ ແລະ ການບໍລິການສາທາລະນະທີ່ສະດວກແລ້ວ, ຍັງລົງທຶນ ແບບຊະຊາຍ ໃນບາງທ້ອງຖິ່ນ ແລະ ຂາດການກວດກາ-ປະເມີນຜົນ ຢ່າງເປັນລະບົບ ຊຶ່ງເປັນສາຍເຫດ ເຮັດໃຫ້ ດິນທີ່ເຊົ່າ ແລະ ສຳປະທານ ໃນການປູກ-ການລ້ຽງ ບໍ່ຖືກນຳໃຊ້ ຕາມເງື່ອນໄຂສັນຍາ, ເຮັດໃຫ້ເສຍຜົນປະໂຫຍດ. ສະນັ້ນ ເຫັນວ່າ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ສົມທົບກັບແຂວງຕ່າງໆ ເພື່ອພ້ອມກັນລົງກວດກາ ແລະ ຊ່ວຍ ແຂວງ ແກ້ໄຂໃນບັນຫາ ດັ່ງກ່າວ ໂດຍໄວ້ເພື່ອຍາດແຍ່ງແຫຼ່ງທຶນເຂົ້າໃສ່ຈຸດສຸມພັດທະນາຂອງແຂວງ ໂດຍການໃຫ້ນະໂຍບາຍສະໜັບສະໜູນດ້ານຕ່າງໆ ທີ່ເໝາະສົມ.

ອີກປະເດັນໜຶ່ງ ທີ່ຄວນສຸມໃສ່ ແກ້ໄຂຮີບດ່ວນ ການເກັບລາຍຮັບຈາກ ຄ່າເຊົ່າ ແລະ ສຳປະທານທີ່ດິນ (ອີງຕາມລັດຖະບັນຍັດ 02/ປປທ, ລົງວັນທີ 18 ພະຈິກ 2009) ຈາກໂຄງການ ໂຄງການ ເຊົ່າ ແລະ ສຳປະທານ ໃນ ຂະແໜງການ ກະສິກຳ ແລະ ປ່າໄມ້ ເຫັນວ່າ ໃນປີໜຶ່ງ ລັດຖະບານ ອາດມີລາຍຮັບ ຈາກຄ່າເຊົ່າ ແລະ ສຳປະທານ ດັ່ງກ່າວຈຳນວນ 53 ລ້ານກວ່າໂດລາ ຊຶ່ງຖ້າເກັບ ທຸກໆໂຄງການ ລວມທັງ ມີການເຄື່ອນໄຫວ ແລະ ບໍ່ໄດ້ເຄື່ອນໄຫວ ໂດຍສະເພາະ ໂຄງການ ຂະແໜງກະສິກຳ ຈະໄດ້ຮັບ 1,307,540 ໂດລາ ຕໍ່ປີ (ເນື້ອທີ່ອະນຸມັດ) ແຕ່ຖ້າຄິດໄລ່ຕາມເນື້ອທີ່ນຳໃຊ້ ຈະໄດ້ 490,066 ໂດລາ ຕໍ່ປີ ແລະ ໂຄງການ ຂະແໜງ ປູກໄມ້ ຈະໄດ້ຮັບ 7,922,102 ໂດລາ ຕໍ່ປີ ( ເນື້ອທີ່ອະນຸມັດ) ແຕ່ຖ້າຄິດໄລ່ຕາມເນື້ອທີ່ນຳໃຊ້ຈະດ້ 5,200,282 ໂດລາ ຕໍ່ປີ ຊຶ່ງກໍ່ເປັນ ງົບປະມານ ຈຳນວນ ຫຼວງຫຼາຍ ທີ່ສາມາດ ນຳໃຊ້ ເຂົ້າໃນ ການພັດທະນາ ຕາມຈຸດສຸມ ບຸລິມະສິດ ຂອງ ແຂວງ. ແຕ່ຜ່ານມາ ຍັງປະຕິບັດ ບໍ່ໄດ້ດີ ເຮັດໃຫ້ ລາຍຮັບ ດັ່ງກ່າວ ບໍ່ເຂົ້າໃນລະບົບ.

ສັງລວມແລ້ວ ບັນຫາ ທີ່ເຮົາປະສົບ ສຳລັບ ປີ 2018 ຊີ້ໃຫ້ພວກເຮົາເຫັນ ບັນຫາຄົງຄ້າງ ເຫັນວ່າ ພວກເຮົາ ຍັງຂາດຄວາມພ້ອມ ຫຼາຍດ້ານ ໃນການ ຮັບມືກັບ ການປ່ຽນແປງ ດິນອາກາດ ຂອງໂລກ; ຄວາມໝັ້ນຄົງດ້ານ ສະບຽງອາຫານ ຍັງອ່ອນໄຫວຫຼາຍ ສະແດງອອກ ບາງດ້ານ ຕົ້ນຕໍຄື:

1) ພວກເຮົາ ຍັງບໍ່ທັນມີ **ຍຸດທະສາດ ການບໍລິຫານ ຈັດການນ້ຳ ແລະ ຊົນລະກະເສດ ລະດັບ ຊາດ** ໃນຂອບເຂດ ທົ່ວປະເທດ ແລະ ເປັນແຕ່ ເຂດແຄ້ວນ.
2) ບໍ່ທັນ ເປັນເຈົ້າການ ໃນການພັດທະນາ, **ສະສົມ ແລະ ຄຸ້ມຄອງ ແນວພັນພືດ**, ທັນຍາຫານ, ສັດ ແລະ ສັດນ້ຳ ໃຫ້ແກ່ ຄວາມຕ້ອງການ ການສຸກເສີນ ລະດັບຕ່ຳ ຫາ ກາງ ໄດ້ເທື່ອ.

3) ບໍ່ທັນມີຄວາມ **ກຽມພ້ອມ ດ້ານພາຫະນະ, ວັດຖຸອຸປະກອນ, ກົນຈັກ ທີ່ຈຳເປັນ**, ຢາປາບສັດຕູພືດ, ຢາຕ້ານພາຍຸ, ພະຍາດສັດ ນັບທັງ ງົບປະມານ ແກ້ໄຂ ສຸກເສີນ. ນອກນີ້ ເຫັນວ່າ ດ້ານ ພະນັກງານດ້ານວິຊາສະເພາະ ຍັງຂາດ ທັງດ້ານ ຈຳນວນ ແລະ ຄຸນນະພາບ ຂອງ ການປະຕິບັດ ໜ້າທີ່ວຽກງານ ທີ່ເອົາການເອົາງານ.
4) **ຍັງບໍ່ທັນ ຜັນຂະຫຍາຍ ຍຸດທະສາດ ພັດທະນາ ກະສິກຳ ມາເປັນ ແຜນຍຸດທະສາດສະເພາະແຕ່ລະດານ, ແຜນແມ່ບົດ ແລະ ໂຄງການ ໃນການ ຈັດສັນ ເຂດຜະລິດສະເພາະພື້ນທີ່** ທີ່ດຳເນີນການຜະລິດ ສຳລັບພືດ, ການລ້ຽງສັດລ້ຽງປາ ຍັງເຮັດໄປຕາມທຳມະຊາດ ເຮັດໃຫ້ມີຜົນກະທົບ ໃນທຸກປີ ໃນເຂດດຽວ. ພວກເຮົາຍັງບໍ່ມີ ມາດຕະການ ແກ້ໄຂບັນຫາ ການເຮັດໄຮ່ຢ່າງເດັດຂາດ ຈຶ່ງເຮັດໃຫ້ສະພາບນ້ຳຖ້ວມ ຢູ່ເຂດພູດອຍໜັກຂຶ້ນເລື້ອຍໆ.
5) **ຂາດຖານຂໍ້ມູນ ທີ່ໜ້າເຊື່ອຖື ແລະ ທັງບໍ່ທັນເວລາ**, ການຈັດຕັ້ງ ຄະນະສະເພາະກິດຫຼາຍ ແຕ່ ຊ້ຳຊ້ອນກັນ, ການປະສານງານ ແລະ ແບບແຜນ ວິທີເຮັດວຽກ ບໍ່ທັນ ກົມກຽວກັນ, ດັ່ງນັ້ນ ມັນບໍ່ສະເພາະແຕ່ຈະບໍ່ສົ່ງເສີມ ຂະຫຍາຍ ກຳລັງແຮງ ທົ່ວທັງລະບົບ ການຈັດຕັ້ງ ທີ່ມີ ໃຫ້ມີ ປະສິດທິພາບໄດ້ ແຕ່ຫາກຍັງກາຍເປັນຂໍ້ຈຳກັດໃຫຍ່ ຂອງວຽກງານ ພະຍາກອນ ແລະ ເຕືອນໄພ ລວງໜ້າ ເປັນປົກກະຕິ ເປັນເດືອນ, ເປັນປີ. ພ້ອມດຽວກັນນັ້ນ ກໍ່ເຫັນໄດ້ວ່າ ຂີດຄວາມສາມາດ ໃນການ ປະເມີນ ຄວາມເສຍຫາຍ ຄວາມໜ້າເຊື່ອຖື ຍັງຕ່ຳ, ບໍ່ເອກະພາບ ແລະ ທັນເວລາ ຍ້ອນຂາດ ຖານຂໍ້ມູນ ທີ່ລັກສະນະ ວິທະຍາສາດ.
6) **ບໍ່ທັນສ້າງ ຕາໜ່າງ ແລະ ເຂືອຄ່າຍຂໍ້ມູນ** ເຊື່ອມໂຍງ ລະຫວ່າງ ກະຊວງ, ຂະແໜງການ ເພື່ອບໍລິຫານຈັດການນ້ຳ ໄປລວງດຽວກັນ ແລະ ເຊື່ອມໂຍງ ລະຫວ່າງ ສູນກາງ-ທ້ອງຖິ່ນ ແລະ ສາກົນ ເພື່ອວາງກົນໄກ.

**ນອກນັ້ນ, ກໍ່ຍັງມີບາງປະເດັນ ທີ່ຕັ້ງຂຶ້ນ ເປັນຂໍ້ສັງເກດ ຊຶ່ງຈະໄດ້ ສືບຕໍ່ສຸມໃສ່ ປະຕິບັດ ໃນປີ 2019 ແລະ 2020 ດັ່ງລາຍລະອຽດ ລຸ່ມນີ້:**

1) ງົບປະມານ ຍັງບໍ່ທັນພຽງພໍ ຕໍ່ກັບຄວາມຕ້ອງການ ປັບປຸງສ້ອມແປງ ພື້ນຖານໂຄງລ່າງ ຊົນລະປະທານ ທີ່ເປ່ເພຫຼາຍ ໂດຍສະເພາະ ໃນພື້ນທີ່ ຈຸດສຸມ ການປູກເຂົ້າ ກຳນົດໄວ້.
2) ງົບປະມານ ສົ່ງເສີມ ວິຊາການ ກໍ່ບໍ່ສາມາດ ອະນຸມັດທັນ ຕາມລະດູການ ການຜະລິດ ເຮັດໃຫ້ ການຈັດຕັ້ງປະຕິບັດ ບັນດາ ໂຄງການ ພົບຂໍ້ຫຍຸ້ງຍາກ, ຊັກຊ້ຳ ແລະບໍ່ໄດ້ຮັບຜົນເທົ່າທີ່ຄວນ;
3) ການລົງທຶນໃສ່ ວຽກສົ່ງເສີມ ເຕັກນິກ ບໍ່ພຽງພໍ ແລະ ຖ້າມີກໍ່ມີໜ້ອຍຫຼາຍ ເປັນຕົ້ນແມ່ນວຽກແນວພັນ; ວຽກກຳນົດໝາຍ ແບ່ງເຂດດິນ ຜະລິດສະເພາະ ແລະ ການປັບປຸງດິນ; ວຽກສົ່ງເສີມ ບໍລິການເຕັກນິກ; ຈັດຕັ້ງກຸ່ມ, ສະຫະກອນ ກໍ່ຄື ຮູບແບບການຜະລິດ ຮ່ວມມືປະຊາຊົນ; ວຽກພັດທະນາພື້ນທີ່ ເປີດກວ້າງການຜະລິດ ນຳໃຊ້ກົນຈັກ ທີ່ເໝາະສົມ ແລະ ຕາມມາດຕະຖານ ກະສິກຳສະອາດ ແລະ ການລົງທຶນໃສ່ວຽກ ດ່ານ ແລະ ວຽກວິໄຈຄຸນນະພາບ ແລະ ມາດຕະຖານ ຜະລິດຕະພັນພືດ, ສັດ, ປາ ແລະ ອື່ນໆ ທີ່ຜະລິດຮັບໃຊ້ພາຍໃນ ແລະ ສົ່ງອອກ.
4) ການລົງທຶນ FDI ກໍ່ບໍ່ມີຈຸດສຸມ, ບໍ່ປະຕິບັດຕາມ ລະບຽບການລົງທຶນ ກ່ຽວກັບ ການຈັດສັນເຂດພື້ນທີ່ລົງທຶນ, ຍັງລົງທຶນ ແບບຊະຊາຍ ໃນບາງທ້ອງຖິ່ນ ແລະ ຂາດການກວດກາ-ປະເມີນຜົນ ຢ່າງເປັນລະບົບ.
5) ການຊຸກຍູ້ຕິດຕາມ ການຈັດຕັ້ງປະຕິບັດ ການລົງທຶນຂອງລັດ, ງົບປະມານຊ່ວຍເຫຼືອ, ການລົງທຶນຂອງເອກະຊົນ, ສິນເຊື່ອທະນາຄານ ຍັງປະຕິບັດບໍ່ໄດ້ດີ ເທົ່າທີ່ຄວນ, ການສຸມທຶນໃສ່ທ້ອງຖິ່ນ ບໍ່ໄປລວງດຽວກັນ.
6) ການຜັນຂະຫຍາຍ ນະໂຍບາຍລົງທຶນ ສູ່ເຂດຊົນນະບົດທຸກຍາກ ກໍ່ຍັງບໍ່ທັນປະຕິບັດ ຢ່າງມີຈຸດສຸມ ທັ້ງໆທີ່ມີການຕົກລົງ ຂອງ ລັດຖະບານ. ທຶນລົງໃສ່ວຽກພັດທະນາ ຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນຄວາມເປັນຈິງມີຫລາຍສົມຄວນ ແຕ່ນຳໃຊ້ໂດຍບໍ່ມີການປະສານແຜນ, ການເຊື່ອມໂຍງ ດ້ານແຜນການ ແລະ ການລົງທຶນ ໂດຍສະເພາະ ກະຊວງ-ຂະແໜງການ ກ່ຽວຂ້ອງ ແລະ ທະນາຄານ. ເຮັດໃຫ້ເກີດສະພາບຕ່າງຝ່າຍ-ຕ່າງເຮັດ ແຕ່ບໍ່ໄດ້ຮັບຜົນຕາມລະດັບຄາດຫມາຍ.
7) ປະຕິບັດນະໂຍບາຍ ຊ່ວຍໜູນ ດ້ານຕ່າງໆ ເປັນຕົ້ນແມ່ນ ດ້ານພາສີ, ອາກອນ ແລະ ອື່ນໆ ຍັງປະຕິບັດ ບໍ່ເປັນເອກະພາບກັນ ຊຶ່ງເຮັດໃຫ້ ມີການສິ້ນເປືອງສູງ ແລະ ມີຕົ້ນທຶນການຜະລິດສູງ.

**2. ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2019**

- ອີງຕາມ ມະຕິ ສະພາແຫ່ງຊາດ ສະບັບເລກທີ 099/ສພຊ, ລົງວັນທີ 28 ພະຈິກ 2018 ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ປີ 2018 ແລະ ທິດທາງ ແຜນການ ປີ 2019
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 560/ນຍ, ລົງວັນທີ 31 ທັນວາ 2018 ວ່າດ້ວຍການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດແລະ ແຜນງົບປະມານ ແຫ່ງລັດ ປະຈຳປີ 2019.
- ອີງຕາມ ຄຳແນະນຳ ຂອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 0018/ກງ, ລົງວັນທີ 03 ມັງກອນ 2019 ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານ ແຫ່ງລັດ ປະຈ□າປີ 2019.
- ອີງຕາມ ແຈ້ງການ ຂອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງ ການເງິນ ສະບັບເລກທີ 0086/ກງ, ລົງວັນທີ 04 ມັງກອນ 2019 ວ່າດ້ວຍ ການແຈ້ງແຜນງົບປະມານ ປີ 2019 ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຄຳແນະນຳ ຂອງ ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ເລກທີ 0022/ກຜທ, ລົງວັນທີ 2 ມັງກອນ 2019 ກ່ຽວກັບ ການຈັດຕັ້ງ ປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ປະຈຳປີ 2019.

ໃນແຜນການ ປີ 2019, ບົນພື້ນຖານ ບັນດາ ຄາດໝາຍ ທີ່ໄດ້ກຳນົດໄວ້ ໃນມະຕິ ສະພາແຫ່ງຊາດ ກໍ່ຄືແຜນພັດທະນາ ເສດຖະກິດ-ສັງຄົມ ປະຈຳປີ, ກະຊວງ ພວກເຮົາ ຈະສືບຕໍ່ສຸມໃສ່ ວຽກງານ ການຜະລິດເຂົ້າ ແລະ ສົ່ງເສີມ ການລ້ຽງສັດ ແລະ ປາ ເພື່ອຮັບປະກັນ ດ້ານຄວາມຫມັ້ນຄົງ ອັນຍາວນານ, ຮັບປະກັນ ໃຫ້ມີສະບຽງພຽງພໍ, ມີສ່ວນແຮໄວ້ ແລະ ສາມາດເປັນພື້ນຖານ ຜະລິດເປັນ ສິນຄ້າ ໄດ້ ໃນໄລຍະຍາວນານ, ໂດຍບໍ່ໃຫ້ຂຶ້ນກັບ ແລະ ອາໃສແຕ່ ທຳມະຊາດ ອີກຕໍ່ໄປ. ອັນນີ້ ເປັນບັນຫາ ທ້າທາຍ ທີ່ທຸກປະເທດ ໃນໂລກ ກຳລັງປະເຊີນຢູ່ ແລະ ເປັນມະຕິໃຫມ່ ຂອງ ອົງການ ສະຫາປະຊາຊາດ ຮອດປີ 2030 ທີ່ໄດ້ວາງທິດທາງ ໃຫ້ທຸກປະເທດ ໃນໂລກ ພະຍາ ຍາມ ແກ້ໄຂ ຄວາມຂາດແຄນ ດ້ານສະບຽງ ອາຫານ ແລະ ດ້ານໂພຊະນາການ ໃຫ້ສຳເລັດເຖິງ 100% ແລະ ເນັ້ນໃສ່ ການດຳເນີນ ການຜະລິດ ກະສິກຳ ທີ່ຍືນຍົງ ແລະ ເປັນມິດ ຕໍ່ສິ່ງແວດລ້ອມ ແລະ ຮັບປະກັນ ພ້ອມດຽວກັນນີ້ ໃຫ້ກາຍເປັນອາຊີບ ທີ່ມີ ຄວາມໝັ້ນຄົງ ດ້ານເສດຖະກິດ ໃຫ້ຊາວກະສິກອນ ແລະ ຊາວຊົນນະບົດ ໃນໄລຍະຍາວນານ, ຊຶ່ງ ກະຊວງ ກະສິກຳ ແລະ ປ່າໄມ້ ພວກເຮົາ ກໍ່ໄດ້ ກຳນົດວຽກຈຸດສຸມ ໂດຍອີງໃສ່ ຕົວເລກທີຄາດໝາຍ ທີ່ກຳນົດໄວ້ໃນ ມະຕິສະພາແຫ່ງຊາດ, ແຜນພັດທະນາ ເສດຖະກິດ-ສັງຄົມ ມາຜັນຂະຫຍາຍ ເຂົ້າວຽກຈຸດສຸມ ເພື່ອສືບຕໍ່ ເຮັດໃຫ້ການຂະຫຍາຍຕົວ ຂອງລວມຍອດຜະລິດຕະພັນ ກະສິກຳ ແລະປາໄມ້ ຂະຫຍາຍຕົວໃນລະດັບ 2,8% ຂຶ້ນໄປກວມເອົາປະມານ 15,3% ຂອງ ໂຄງປະກອບເສດຖະກິດແຫ່ງຊາດ, ປະກອບສ່ວນໃຫ້ GDP ຂະຫຍາຍຕົວ ໃນລະດັບ 6,7% ຂຶ້ນໄປ. ກໍ່ຄື ການສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ຮັກສາໄວ້ ຢູ່ໃນລະດັບ 4,4 ລ້ານກວ່າໂຕນ, ກາເຟ ໃຫ້ໄດ້ 160.000 ໂຕນ, ສາລີອາຫານສັດ ໃຫ້ໄດ້ 1 ລ້ານໂຕນ, ມັນຕົ້ນ 2,28 ລ້ານໂຕນການຜະລິດຊີ້ນ 199,210 ໂຕນ, ໄຂ່ 43.770 ໂຕນ ແລະ ປາ 215.000 ໂຕນ ຮັກສາລະດັບ ການບໍລິໂພກຕໍ່ຄົນ ໃນປີ ປະມານ 62 ກິໂລ/ຄົນ/ປີ.

ເພື່ອດຳເນີນ ການຈັດຕັ້ງປະຕິບັດ ແຜນວຽກຈຸດສຸມ ປີ 2019 ໃຫ້ມີ ປະສິດທິຜົນສູງ, ກົມກອງ, ລ່ອງລຽນທັງສູນກາງ ແລະ ທ້ອງຖິ່ນ ແນ່ໃສ່ຮັບປະກັນ **ໃນເງື່ອນໄຂ ການປ່ຽນແປງ ດິນຟ້າ ອາກາດ, ພ້ອມດຽວກັນນີ້ ໃນເງື່ອນໄຂ ງົບປະມານ ການລົງທຶນ ຂອງລັດ ທີ່ມີຢ່າງຈຳກັດ ນັ້ນ**, ແຕ່ວຽກ ຈຸດສຸມ ຕ່າງໆ ບໍ່ໄດ້ຫຼຸດລົງ ບົນພື້ນຖານ ສະພາບຕົວຈິງ ທີ່ປະສົບຢູ່ ໃນປະຈຸບັນ ທາງຄະນະນຳ ພັກ ແລະ ຄະນະນຳລັດ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ແມ່ນ ຈະໄດ້ຄົ້ນຄວ້າຄືນ ມາດຕະຖານ ການລະດົມຂົນຂວາຍ ແຫຼ່ງທຶນ ຈາກແຫຼ່ງອື່ນໆ ເຊັ່ນ: ທຶນຊ່ວຍເຫຼືອ ທາງການ ເພື່ອການພັດທະນາ, ການລົງທຶນ ຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ, ແຫຼ່ງທຶນ ຈາກ ສິນເຊື່ອ ທະນາຄານ ຕ່າງໆ.

ດັ່ງທີ່ ຂ້າພະເຈົ້າ ໄດ້ກ່າວມາຂ້າງເທິງນັ້ນ, ນອກຈາກ ງົບປະມານ ແຫ່ງລັດ ທີ່ມີຢ່າງຈ□າກັດນັ້ນ, ກໍ່ຍັງມີງົບປະມານ ຈາກ ແຫຼ່ງອື່ນໆ ເຊັ່ນ: ຊກພ (**ODA**), FDI ແລະ ລະບົບສິນເຊື່ອທະນາຄານ ຊຶ່ງທັງ 3 ແຫຼ່ງທຶນນີ້ຈະເປັນ ແຫຼ່ງທຶນ ສົມທົບບວກກັບ ງົບປະມານ ການລົງທຶນຂອງລັດ ໃນການ ເຄື່ອນໄຫວວຽກງານ ກະສິກຳ ແລະ ປ່າໄມ້ ໃນປີ 2019 ແລະ 2020 ໂດຍສະເພາະ ງົບປະມານ ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາ (ຊກພ

**ODA**) ທີ່ມີເຖິງ 678,13 ລ້ານໂດລາ, INGOs ແລະ NGO ມູນຄ່າ 29,56 ລ້ານໂດລາ ຊຶ່ງຈັດຕັ້ງປະຕິບັດ ຢູ່ ບັນດາ ແຂວງ ຂອບເຂດ ທົ່ວປະເທດ ຊຶ່ງມີລາຍລະອຽດ ແຕ່ລະດ້ານ ດັ່ງລຸ່ມນີ້:

**ລະບົບສິນເຊື່ອ ທະນາຄານ**

ນອກນັ້ນ, ກໍ່ຍັງມີ ແຫຼ່ງທຶນ ໃນລະບົບ ສິນເຊື່ອ ທະນາຄານ ຊຶ່ງກໍ່ເປັນ ແຫຼ່ງໜຶ່ງ ທີ່ສ□າຄັນ ຊຶ່ງມີການ ລົງທຶນໃສ່ ລະບົບສິນເຊື່ອ ທະນາຄານ ປະມານ 9.788 ຕື້ກີບ ໃນປີ 2019 (ຕາມມະຕິ ເລກທີ 099/ສພຊ), ຊຶ່ງ ໃນປີ 2018 ຜ່ານມາ ການລົງທຶນໃສ່ຂະແໜງການກະສິກຳ ແລະ ປ່າໄມ້ ສັງລວມຮອດ ໄຕມາດ ທີ່ 3 ຊຶ່ງໄດ້ມີ ການລົງ ທຶນໃສ່ ຂະແໜງກະສິກຳ ແລະ ປ່າໄມ້ ທັງໝົດ 5.753,86 ຕື້ກີບ (ຂໍ້ມູນຈາກເວບໄຊທະນາຄານ ແຫ່ງ ສປປ ລາວ).

**ຕາຕະລາງ: ສິນເຊື່ອແຍກຂະແໜງການຂອງທະນາຄານທຸລະກິດທົ່ວລະບົບ (ຫົວໜ່ວຍຕື້ ກີບ)**

| ເນື້ອໃນ | Mar-18 | Jun-18 | Sep-18 |
|---|---|---|---|
| ຂະແໜງອຸດສະຫະກຳ ແລະ ຫັດຖະກຳ | 19,633.09 | 20,084.09 | 20,957.92 |
| ຂະແໜງກໍ່ສ້າງ | 8,271.81 | 7,984.63 | 8,228.55 |
| ຂະແໜງປະກອບ-ວັດຖຸເຕັກນິກ | 461.51 | 414.41 | 624.71 |
| **ຂະແໜງກະສິກຳ-ປ່າໄມ້** | **5,842.39** | **5,707.00** | **5,753.86** |
| ຂະແໜງການຄ້າ | 13,418.51 | 13,466.79 | 14,035.01 |
| ຂະແໜງຂົນສົ່ງ-ໄປສະນີ | 1,057.39 | 1,061.78 | 1,063.89 |
| ຂະແໜງບໍລິການ | 6,942.79 | 6,874.53 | 6,840.85 |
| ຂະແໜງອື່ນໆ | 11,758.91 | 11,896.00 | 11,286.70 |
| **ລວມ** | **67,386.40** | **67,489.22** | **68,791.48** |

ແຕ່ປະເດັນ ຕັ້ງຂຶ້ນແມ່ນ ໂຄງສ້າງ ການປ່ອຍສິນເຊື່ອ ຂອງ ບັນດາ ທະນາຄານຕ່າງໆ ເຫັນວ່າ ການ ສົ່ງເສີມ ນະໂຍບາຍ ກ່ຽວກັບ ການຜະລິດພາຍໃນ ແບບຍາວນານ ແລະ ເພື່ອສ້າງຄວາມເຂັ້ມແຂງ, ຄວາມເປັນ ເຈົ້າຕົນເອງ ແມ່ນມີໜ້ອຍ, ສ່ວນໃຫຍ່ ຜູ້ປະກອບການ ແມ່ນໄດ້ຮັບ ສິນເຊື່ອໄລຍະສັ້ນ ຊຶ່ງນັ້ນໝາຍວ່າ ພຽງແຕ່ ໝູນໃຊ້ ເງິນກູ້ ຊື້ແຕ່ເຮັດວັດຖຸດິບ ຈາກພາຍນອກມາໃຊ້, ເຮັດໃຫ້ ການຜະລິດ ກະສິກຳ ລາວ ຂຶ້ນນຳພາຍນອກ ເປັນອັນຕົ້ນຕໍ. ແຕ່ ບາງ ໂຄງການ ແມ່ນໄດ້ ນຳໃຊ້ ເງິນກູ້ ໄລຍະສັ້ນ ລົງທຶນໃສ່ ກິດຈະກຳ ທີ່ຮັບໃຊ້ ວຽກໃນ ໄລຍະຍາວນານ ຈຶ່ງເຮັດໃຫ້ ຕົກໃນບັນຊີ NPL ຫຼື ໜີ້ສິນ ເພື່ອທັນທີດ ການສົ່ງເສີມ ຜູ້ປະກອບການ ລາວ ໃຫ້ ເຂັ້ມແຂງ ເປັນ ເຈົ້າຕົນເອງ ໃນໄລຍະຍາວ ເຫັນວ່າ ຕ້ອງໄດ້ ຄົ້ນຄວ້າຄືນ ແລະ ມີນະໂຍບາຍຈະແຈ້ງ ກ່ຽວກັບ ການປ່ອຍສິນເຊື່ອ ຕໍ່ກັບ ໂຄງການ ຂອງ ຂະແໜງກະສິກຳ ໂດຍສະເພາະ ຕ້ອງໄດ້ເບິ່ງຄືນ ທຶນໝູນວຽນ, ທຶນໝູ ນວຽນປະຈຳປີ ແລະ ທຶນກໍ່ສ້າງ ພື້ນຖານໂຄງລ່າງ ເພື່ອຫັນໄປສູ່ ການຜະລິດ ແບບອຸດສາຫະກຳ ແລະ ທັນສະໄ ໝ ໝາຍວ່າ ການລົງທຶນ ຄືບຕ່ອງໂສ້ ໃຫ້ສາມາດ ແຂ່ງຂັນໄດ້ ໃນຕະຫຼາດສາກົນ.

**ງົບປະມານ ຂອງ (ຊກພ ODA)**

ປະເດັນ ທີ່ຕັ້ງຂຶ້ນແມ່ນ ການເຊື່ອມໂຍງແຜນ ຂອງ ທ້ອງຖິ່ນ (ແຜນພັດທະນາຈຸດສຸມ) ກັບ ບັນດາ ໂຄງການ ທີ່ຈັດຕັ້ງປະຕິບັດ ຢູ່ ບັນດາ ເມືອງ, ແຂວງ ນັ້ນ ຈະມີກົນໄກ ຊ່ວຍໝູນ ແນວໃດ ໃນການ ນຳໃຊ້ ງົບປະມານ ດັ່ງກ່າວ ໂດຍສະເພາະ ງົບປະມານ ຂອງ (ຊກພ **ODA**) ຊຶ່ງມີ ປະມານ 678,13 ລ້ານໂດລາ ຊຶ່ງກໍ່ມີ ຫຼາຍໂຄງການ ທີ່ຈັດຕັ້ງຢູ່ແຂວງ ທີ່ຊ່ວຍສ້າງຄວາມເຂັ້ມແຂງ, ສົ່ງເສີມ ການປູກ-ລ້ຽງ, ປັບປຸງ ໂຄງລ່າງ, ປົກປັກ ຮັກສາ ປ່າໄມ້-ຊີວະນາໆພັນ ເຊັ່ນ: ໂຄງການ ກະສິກຳ ເພື່ອໂພຊະນາການ ທີ່ປະຕິບັດ ຢູ່ 4 ແຂວງ ພາກເໜືອ (ຊຽງຂວາງ, ຫົວພັນ, ອຸດົມໄຊ ແລະ ຜົ້ງສາລີ), ໂຄງການ ພັດທະນາ ໂຄງລ່າງຊົນນະບົດ ພາກເໜືອ (ຫຼວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຜົ້ງສາລີ), ໂຄງການຜະລິດ ກະສິກຳ ເປັນສິນຄ້າ (ໄຊຍະບູລີ, ວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ ແລະ ຄຳມ່ວນ), ໂຄງການ ຄຸ້ມຄອງ ປ່າໄມ້ ແບບຍືນນານ (ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ໄຊຍະບູລີ, ວຽງຈັນ, ນະຄອນຫຼວງວຽງຈັນ, ໄຊສົມບູນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ, ອັດຕະ ປື) ເຫຼົ່ານີ້ ເປັນຕົ້ນ.

**ໃນປີ 2019** ເຫັນວ່າ ງົບປະມານ ທີ່ຈະສຸມໃສ່ ມີທັງໝົດ **71 ໂຄງການ ມີມູນຄ່າ ທັງໝົດ 128,70 ລ້ານໂດລາ**, ໃນນັ້ນ ທຶນຕ່າງປະເທດ ມີ 117,85 ລ້ານໂດລາ, ທຶນພາຍໃນ 10,85 ລ້ານໂດລາ ທີ່ຈັດຕັ້ງປະຕິບັດ ຢູ່ ບັນດາ ແຂວງ ດັ່ງກ່າວມາຂ້າງເທິງນີ້; ເພື່ອເຮັດໃຫ້ ວຽກງານ ຂອງ ທ້ອງຖິ່ນ ໄດ້ເຄື່ອນໄຫວ ຕາມວຽກຈຸດສຸມ ທີ່ກໍານົດ ທັງໂດຍກົງ ແລະ ທາງອ້ອມ ກໍ່ຕາມ ໂດຍສະເພາະ ບັນດາ ໂຄງການ ຈຸດສຸມ ຂອງ ແຂວງ ທີ່ໄດ້ມີການ ກໍານົດ ວຽກຮ່ວມກັນ ທັງທີ່ໄດ້ດໍາເນີນໄປແລ້ວ, ກໍາລັງ ຈະດໍາເນີນ ໃນປີນີ້ ແລະ ໃນຕໍ່ໜ້າ ຊຶ່ງເຫັນວ່າ ຕ້ອງໄດ້ ທົບທວນຄືນ ແຜນດໍາເນີນງານ ຂອງ ແຂວງ ກໍ່ຄື ຂອງ ເມືອງ ຖ້າເຫັນວ່າ ຍັງບໍ່ທັນສອດຄ່ອງ. ພ້ອມດຽວກັນນີ້, ກໍ່ຕ້ອງ ໄດ້ ປຶກສາຫາລື ຮ່ວມກັບ ຄະນະຊີ້ນໍາ ໂຄງການ, ຜູ້ປະສານງານ ແລະ ຜູ້ໃຫ້ທຶນ ໃນການ ສຸມທຶນ, ສຸມເຕັກນິກ ໃສ່ ວຽກຈຸດສຸມ ຂອງ ທ້ອງຖິ່ນ ທັງດ້ານ ໂຄງລ່າງ, ການສ້າງ ຄວາມເຂັ້ມແຂງ ດ້ານວິຊາການ ແລະ ອື່ນໆ ໃຫ້ມີປະ ສິດທິຜົນສູງ ແລະ ກົມກຽວ.

## ການລົງທຶນ ຂອງ ຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ (FDI)

ໃນກໍລະນີ, ການລົງທຶນ ຂອງ ຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ (FDI) ກໍ່ມີການລົງທຶນໃສ່ ຂະແ ໜງ ການ ກະສິກໍາ ແລະ ປ່າໄມ້ ຫຼາຍສົມຄວນ ຄືດັ່ງກ່າວມາຂ້າງເທິງນັ້ນ, ແຕ່ຜ່ານການຕີລາຄາ ເຫັນວ່າ ການ ລົງທຶນບໍ່ມີຈຸດສຸມ, ມີຫຼາຍໂຄງການ ບໍ່ປະຕິບັດຕາມ ລະບຽບການລົງທຶນ ກ່ຽວກັບ ໂຄງການເຊົ່າ ແລະ ສໍາປະທານ ທີ່ດິນລັດ. ດັ່ງນັ້ນ ເພື່ອເຮັດໃຫ້ ການຄຸ້ມຄອງ ການລົງທຶນ ທະລຸກິດ ກະສິກໍາ ແລະ ປ່າໄມ້ ໃຫ້ສອດຄອງ ກັບ ຄໍາ ສັ່ງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ ໂດຍເລັ່ງໃສ່ ການເພີ່ມທະວີປະສິດທິພາບ ແລະ ຄວາມຮັດກຸມ ໃນ ວຽກງານ ການນໍາໃຊ້ ທີ່ດິນເຂົ້າໃນ ວຽກງານ ພັດທະນາ ກະສິກໍາ ແລະ ປ່າໄມ້ ເຫັນວ່າ ກະຊວງກະສິກໍາ ແລະ ປ່າໄມ້ ຈະໄດ້ສົມທົບ ກັບ ກະຊວງ ຂະແໜງການ ຂັ້ນສູນກາງ ກໍ່ຄື ບັນດາ ແຂວງຕ່າງໆ ເພື່ອພ້ອມກັນລົງກວດກາ, ປະເມີນ ບັນດາ ໂຄງການ ເຊົ່າ ແລະ ສໍາປະທານ ເພື່ອເບິ່ງປະສິດທິຜົນ ຂອງການລົງທຶນ ຖ້າເຫັນວ່າ ໂຄງການ ໃດ ຈັບຈອງ ແຕ່ບໍ່ເຄື່ອນໄຫວ ແມ່ນຈະໄດ້ ດໍາເນີນມາດຕະການ ໂຈະ, ສະເໜີ ຢຸດເຊົ່າ ເພື່ອໃຫ້ ພາກສ່ວນອື່ນ ທີ່ມີ ເຈດຈໍານົງ ພັດທະນາ ທັງນີ້ ກໍ່ເພື່ອ ຊ່ວຍແຂວງ ແກ້ໄຂ ບັນຫາ ດັ່ງກ່າວ ໂດຍໄວ້ ແລະ ເປັນການ ຈັດສັນ ແລະ ກໍານົດແບ່ງເຂດ ຕາມທ່າແຮງ ບໍ່ມຊ້ອນ ເພື່ອຍາດແຍ່ງແຫຼ່ງທຶນ ເຂົ້າໃສ່ ຈຸດສຸມພັດທະນາ ຂອງແຂວງ ໂດຍການ ໃຫ້ນະໂຍບາຍ ສະໜັບສະໜູນ ດ້ານຕ່າງໆ ທີ່ເໝາະສົມ

ອີກປະເດັນໜຶ່ງ ທີ່ຄວນສຸມໃສ່ ແກ້ໄຂຮີບດ່ວນ ການເກັບລາຍຮັບຈາກ ຄ່າເຊົ່າ ແລະ ສໍາປະທານທີ່ດິນ (ອີງ ຕາມລັດຖະບັນຍັດ 02/ປປທ, ລົງວັນທີ 18 ພະຈິກ 2009) ຈາກໂຄງການເຊົ່າ ແລະ ສໍາປະທານ ໃນຂະແໜ ງການ ກະສິກໍາ ແລະ ປ່າໄມ້ ເຫັນວ່າ ໃນປີໜຶ່ງ ລັດຖະບານ ອາດມີລາຍຮັບ ຈາກຄ່າເຊົ່າ ແລະ ສໍາປະທານ ຈາກ ໂຄງການ ເຊົ່າ ແລະ ສໍາປະທານ ດັ່ງກ່າວ ປະມານ 53 ລ້ານກວ່າໂດລາ ຊຶ່ງຖ້າເກັບເຂົ້າໃນລະບົບ ທຸກໆໂຄງການ ລວມທັງ ມີການເຄື່ອນໄຫວ ແລະ ບໍ່ໄດ້ເຄື່ອນໄຫວ ໂດຍສະເພາະ ໂຄງການ ຂະແໜງກະສິກໍາ ຈະໄດ້ຮັບ 1,3 ລ້ານກວ່າ ໂດລາ ຕໍ່ປີ (ເນື້ອທີ່ອະນຸມັດ) ແຕ່ຖ້າຄິດໄລ່ ຕາມເນື້ອທີ່ ນ□າໃຊ້ ຈະໄດ້ເກືອບ 5 ແສນ ໂດລາ ຕໍ່ປີ ແລະ ໂຄງການ ຂະແໜງ ປູກໄມ້ ຈະໄດ້ຮັບ 08 ລ້ານ ໂດລາ ຕໍ່ປີ ( ເນື້ອທີ່ອະນຸມັດ) ແຕ່ຖ້າຄິດໄລ່ຕາມເນື້ອທີ່ນໍາ ໃຊ້ ຈະໄດ້ ປະມານ 5 ລ້ານກວ່າ ໂດລາ ຕໍ່ປີ ຊຶ່ງກໍ່ເປັນ ງົບປະມານ ຈໍານວນ ຫຼວງຫຼາຍ ທີ່ສາມາດ ນໍາໃຊ້ ເຂົ້າໃນ ການພັດທະນາ ຕາມຈຸດສຸມ ບຸລິມະສິດ ຂອງ ແຂວງ ຂອງເມືອງ.

### ມາດຕະການ

ເພື່ອເຮັດໃຫ້ ການສົ່ງເສີມ ການຜະລິດ ສະບຽງ ແລະ ສິນຄ້າ ໃຫ້ມີ ປະສິດທິຜົນ ຈະຕ້ອງຫັນ ການຜະລິດ ໄປສູ່ຮູບໃໝ່ ທີ່ສາມາດດໍາເນີນ ການຜະລິດ ໃນພື້ນທີ່ກວ້າງ ແລະ ສົ່ງເສີມ ການຜະລິດ ໃຫ້ໄດ້ປະລິມານຫຼາຍ ແລະ ຮັບປະກັນ ດ້ານຄຸນນະພາບ; ພ້ອມກັນນີ້ ກໍ່ຫັນໄປສູ່ ການຜະລິດ ທີ່ເປັນກຸ່ມ, ເປັນສະຫະກອນ ຫຼື ຮູບການ ຮ່ວມມື ຂອງປະຊາຊົນ ແບບອື່ນໆ, ທີ່ມີການບໍລິການເຕັກນິກ, ເຕັກໂນໂລຢີໃໝ່ ໃຫ້ແກ່ ຜູ້ຜະລິດ ແລະ ຜູ້ປະ ກອບການ ທີ່ພັດທະນາ ການຜະລິດ ເປັນຕ່ອງໂສ້ ໝາຍວ່າ: ການຜະລິດແມ່ນຕິດພັນກັບ ການປຸງແຕ່ງ ແລະ ການ ບໍລິການ-ການຕະຫຼາດ ຊຶ່ງຕ້ອງເລັ່ງປະຕິບັດ ວຽກຈຸດສຸມ ເຊັ່ນ:

1) ທົບທວນຄືນ ບັນດາ ຍຸດທະສາດ, ແຜນງານ, ໂຄງການ, ນິຕິກໍາ, ນິຕິກໍາ ລຸ່ມກົດໝາຍ ທີ່ສະໜັບສະໜູນ, ເອື້ອອໍານວຍ ໃນການ ປະຕິບັດ ວຽກຈຸດສຸມ ແຕ່ນີ້ ຮອດປີ 2020 ຂອງ ຂະແໜງການ ກະສິກໍາ, ປ່າໄມ້ ແລະ ພັດທະນາ ຊົນນະບົດ ໂດຍເຊື່ອມໂຍງກັບ ຂະແໜງການ ປົ່ນອ້ອມ ໃຫ້ກົມກຽວກັນ.
2) ຮີບຮ້ອນຈັດສັນ ຄຸ້ມຄອງ ການນ□າໃຊ້ ດິນກະສິກໍາ ແລະ ການພັດທະນາ ທີ່ດິນ ກະສິກໍາ ຕິດພັນກັບ ການຮັກສາສະພາບແວດລ້ອມ ແລະ ລະບົບນິເວດຂອງການຜະລິດ ຊຶ່ງໃນຕໍ່ໜ້ານີ້ ຕ້ອງສືບຕໍ່ ເລັ່ງຈັດສັນ

ດິນກະສິກຳ ໃນຂອບເຂດ ທົ່ວປະເທດ ເພື່ອຮັບປະກັນ ໃຫ້ມີເນື້ອທີ່ ຜະລິດ ຄ້ຳປະກັນສະບຽງອາຫານ ໃຫ້ພຽງພໍ ແລະ ຮັກສາດິນກະສິກຳໄວ້ ໃຫ້ໄດ້ 4,5 ລ້ານເຮັກຕາ ໃນນັ້ນ ທີ່ດິນ ສຳລັບການຜະລິດ ສະບຽງອາຫານ ໂດຍສະເພາະ ດິນນາ ບໍ່ໃຫ້ຫຼຸດ 2 ລ້ານເຮັກຕາ ໂດຍດຳເນີນ ການສຳຫຼວດ ຈັດສັນເຂດພື້ນທີ່ ເພື່ອເປັນເປົ້າໝາຍ ສະຫງວນ ແລະ ຮັກສາໄວ້ ສຳລັບ ການຜະລິດ ກະສິກຳ ທີ່ມີເອກະລັກສະເພາະ ທ້ອງຖິ່ນ ເຊັ່ນ: ເຂດປູກກາເຟ ຢູ່ ພູພຽງບໍລະເວນ, ເຂດປູກເຂົ້າໄກ່ນ້ອຍ ຢູ່ ຊຽງຂວາງ ແລະ ຫົວພັນ, ເຂດລ້ຽງສັດໃຫຍ່ ຢູ່ເຂດພູພຽງ ຊຽງຂວາງ ແລະ ປັກຫຼັກໝາຍ ເຂດເນື້ອທີ່ດິນ ກະສິກຳ ທີ່ມີຊົນລະປະທານ ຄົບຊຸດ ໂດຍຫ້າມຫັນປ່ຽນ ການນຳໃຊ້ທີ່ດິນ ໄປເປັນເປົ້າໝາຍອື່ນ ຢ່າງເດັດຂາດ.

3) ຄົ້ນຄວ້າ ແລະ ປັບປຸງຄືນບັນດາກົດໝາຍ ລະບຽບການ ນິຕິກຳຕ່າງໆ ທີ່ພົວພັນເຖິງ ການຄຸ້ມຄອງ ນຳໃຊ້ ດິນກະສິກຳ ທີ່ເຫັນວ່າ ຍັງບໍ່ສອດຄ່ອງ ກັບສະພາບຕົວຈິງ (ການຜັນຂະຫຍາຍ ຄຳສັ່ງ 09/ນຍ), ນອກຈາກນີ້ແລ້ວ ຍັງຕ້ອງໄດ້ຄົ້ນຄວ້າ ສະເໜີ ຮ່າງກົດໝາຍ, ຮ່າງດຳລັດ ທີ່ເຫັນວ່າ ຈຳເປັນ ເຊັ່ນ: ກົດໝາຍ ແລະ ດຳລັດ ການຄຸ້ມຄອງນຳໃຊ້ ດິນກະສິກຳ, ບັນດາ ຄຳສັ່ງ, ຂໍ້ຕົກລົງ ແລະ ລະບຽບການເຊັ່ນ: ລະບຽບການຄຸ້ມຄອງດິນນາ, ການຄຸ້ມຄອງ ດິນກະສິກຳ ເຂດເນີນສູງ ແລະ ອື່ນໆ
4) ກຳນົດນະໂຍບາຍສະເພາະ ຕໍ່ ຂະແໜງການ ກະສິກຳ ແລະ ປ່າໄມ້ ດັ່ງນີ້:
   - ດ້ານການຈັດສັນແບ່ງພື້ນທີ່ ດິນ ຜະລິດສະເພາະ ຊຶ່ງລວມເຖິງດິນ ເພື່ອສົ່ງເສີມການປູກໄມ້ ເປັນສິນຄ້າ ຊຶ່ງຈະເປັນບູລິມະສິດ ແລະ ຍຸດທະສາດຕົ້ນຕໍ ສະໜັບສະໜູນ ອຸດສະຫະກຳປຸງແຕ່ງໄມ້ ສົ່ງອອກໃນຕໍ່ໜ້າ.
   - ສ້າງນະໂຍບາຍສົ່ງເສີມ ການພັດທະນາຊົນລະກະເສດ ໂດຍລວມ, ໂດຍສະເພາະແມ່ນນະໂຍບາຍ ຊຸກຍູ້ສົ່ງເສີມໃຫ້ວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຕັກໂນໂລຢີ ທີ່ທັນສະໄໝ ເຂົ້າໃນການຜະລິດກະສິກຳສະອາດ, ປອດສານພິດ ໃຫ້ເປັນສິນຄ້າ ທີ່ໄດ້ປຽບຂອງປະເທດເຮົາ
   - ອອກນະໂຍບາຍ ແລະ ນິຕິກຳ ອັນຈຳເປັນ ເພື່ອສົ່ງເສີມວິສາຫະກິດ, ຜູ້ປະກອບການ ເຂົ້າໃນການລົງທຶນພັດທະນາ ບັນດາ ຈຸດສຸມ ການຜະລິດ ປູກ, ລ້ຽງ, ປ່າໄມ້, ການບໍລິການ ເປັນຕົ້ນ.
   - ດ້ານນະໂຍບາຍ ກ່ຽວກັບ ການກັກກັນພືດ ແລະ ສັດ ຫຼື ທີ່ເອີ້ນວ່າ SPS.
   - ດ້ານພາສີ, ອາກອນ (ລວມທັງອາກອນມູນຄ່າເພີ່ມ), ດ້ານສິນເຊື່ອ, ດ້ານການຫຼຸດຄ່າໄຟຟ້າ, ດ້ານຂົນສົ່ງ ແລະ ໂລຢິຊຕິກ.
5) ສ້າງແຜນຍຸດທະສາດ ການບໍລິຫານ ຈັດການນ້ຳ, ພັດທະນາຊົນລະກະເສດ, ຕ້ານແລ້ງ, ຕ້ານຖ້ວມ ຂອງຊາດ ໃນເຂດ ອ່າງຮັບນ້ຳ ຕ່າງໆ ທີ່ ເປັນທ່າແຮງ ແລະ ຈຸດສຸມ ພັດທະນາ.

ດັ່ງນັ້ນ, ເພື່ອເຮັດແນວໃດ ໃຫ້ແຜນປີ 2019 ຂອງ ຂະແໜງ ກະສິກ□າ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງ ພວກເຮົາ ສາມາດບັນລຸຜົນ ຕາມທິດນຳ ຂອງພັກ ແລະ ລັດ ແລະ ຕາມແຜນການ, ໂຄງການ ວາງໄວ້ ຈຶ່ງຮຽກຮ້ອງ ໃຫ້ ຄະນະພັກ ແລະ ອຳນາດລັດ ທຸກຂັ້ນ ຍົກສູງ ຄວາມຮັບຜິດຊອບ ຊີ້ນຳ-ນຳພາ ຂອງຕົນ ແລະ ສ້າງໂຄງການ ລະອຽດຕົວຈິງ ທີ່ມີ ຄາດໝາຍ ແລະ ໂຕຊີ້ວັດ ຈະແຈ້ງ ເພື່ອເປັນບ່ອນອີງ ເຄື່ອນໄຫວ ຢ່າງເປັນຂະບວນການຟົດຟື້ນສ້າງຜົນງານ ໃຫ້ແກ່ ຂະບວນການ ແຂ່ງຂັນ ຮັກຊາດ ແລະ ພັດທະນາ. ພ້ອມດຽວກັນນີ້, ກໍ່ຮຽກຮ້ອງ ມາຍັງ ການນຳ ກະຊວງ, ຂະແໜງການ ແລະ ບັນດາ ທ່ານ ການນຳ ແຂວງ ຊ່ວຍສະໜັບສະໜູນ ບັນດາແຜນງານ, ໂຄງການ ທີ່ເຊື່ອມໂຍງ ແລະ ຕິດພັນກັບ ຊຶ່ງຂະແໜງການ ກະສິກຳ, ປ່າໄມ້ ແລະ ພັດທະນາ ຊົນນະບົດແມ່ນກຽມພ້ອມ ຮ່ວມມື, ເຊື່ອມໂຍງ ແຜນການ, ແຜນຄົນ ເຂົ້າກັບ ຂະແໜງການ ທີ່ກ່ຽວຂ້ອງ ເພື່ອພ້ອມກັນປະຕິບັດ ຄາດໝາຍສູ້ຊົນ ໃຫ້ສຳເລັດ ຕາມແຜນການ ທີ່ວາງໄວ້ ໃນແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ກໍ່ຄື ແຜນພັດທະນາ ປະຈຳປີ ຂອງ ແຕ່ລະຂະແໜງການ.

ຂໍຂອບໃຈ